ສຽງຂອງສະພາແຫ່ງຊາດ

ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

01-08 ພະຈິກ 2026 ປີທີ 15 ສະບັບທີ 1088

ກອງປະຊຸມ ຄປຈສພຊ ສະໄໝວິສາມັນ ປະຈຳເດືອນຕຸລາ



(ສພຊ) - ກອງປະຊຸມຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ) ສະໄໝວິສາມັນ ປະຈຳເດືອນຕຸລາ ໄດ້ຈັດຂຶ້ນໃນວັນທີ 9 ຕຸລາ 2026 ໂດຍການເປັນປະທານຂອງທ່ານ ສອນໄຊ ສີພັນດອນ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ; ເຂົ້າຮ່ວມມີບັນດາທ່ານຮອງປະທານ ແລະ ກຳມະການໃນ ຄປຈສພຊ, ຮອງປະທານກຳມາທິການ-ຮອງຫົວໜ້າຫ້ອງວ່າການສະພາແຫ່ງຊາດ ແລະ ພາກສ່ວນກ່ຽວຂ້ອງ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ພິຈາລະນາບັນຫາສຳຄັນພື້ນຖານຂອງປະເທດຊາດຕາມຂອບເຂດສິດ ແລະ ໜ້າທີ່ຂອງຄະນະປະຈຳສະພາແຫ່ງຊາດ ທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ ເຊິ່ງກອງປະຊຸມຄັ້ງ

ອ່ານຕໍ່ໜ້າ 8



ແນວຄິດປະທານ
ໄກສອນ ພົມວິຫານ
ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ເພີ່ມທະວີກໍ່ສ້າງ ແລະ ປັບປຸງລະບົບອຳນາດການປົກຄອງ ແລະ ອົງການຈັດຕັ້ງມະຫາຊົນທຸກຂັ້ນ, ຖືເປັນສຳຄັນພິເສດການປັບປຸງຂັ້ນເມືອງ, ຂັ້ນຕາແສງ ບົນພື້ນຖານປັບປຸງພັນທະພາບກຳມະກອນ-ຊາວນາ ໃຫ້ແໜ້ນແກ່ນ ພາຍໃຕ້ການນຳພາຂອງພັກ.

(ນິພົນເລືອກເຟັ້ນ ເຫຼັ້ມ 2, ໜ້າ 43)

ອ່ານຕໍ່ສະບັບໜ້າ

ປີ 2026 ສະພາແຫ່ງຊາດ ມີຜົນສຳເລັດຫຼາຍດ້ານ



(ສພຊ) - ທ່ານ ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ໄດ້ຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ (ຄປຈ ສພຊ)ລາຍງານການເຄື່ອນໄຫວວຽກງານປະຈຳປີ 2026 ແລະ ແຜນການເຄື່ອນໄຫວວຽກງານປະຈຳປີ 2027 ຂອງສະພາແຫ່ງຊາດ ເຊິ່ງຕະຫຼອດໄລຍະ

ອ່ານຕໍ່ໜ້າ 8

ກະຊວງ ປກສ ສະເໜີປັບປຸງກົດໝາຍ ກຳລັງປ້ອງກັນຄວາມສະຫງົບປະຊາຊົນ



(ສພຊ) - ທ່ານ ພົທ. ວັນທອງ ກອງມະນີ ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ (ປກສ) ໄດ້ສະເໜີເຫດຜົນ ແລະ ຄວາມຈຳເປັນໃນການປັບປຸງກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ ຕໍ່ກອງປະຊຸມສະໄໝສາມັນເທື່ອ 2 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ X ໃນວັນທີ 13 ຕຸລານີ້ ເຊິ່ງທ່ານໃຫ້ຮູ້ວ່າ: ກະຊວງປ້ອງກັນຄວາມສະຫງົບ ໄດ້ປະເມີນຜົນການຈັດຕັ້ງປະຕິບັດກົດໝາຍສະບັບດັ່ງກ່າວ ໃນຂອບເຂດທົ່ວກຳລັງ ປກສ ເຫັນວ່າຫຼາຍກົນກອງໄດ້ມີຄຳເຫັນໃຫ້ປັບປຸງບາງມາດ, ໝວດ, ມາດຕາທີ່ມີຄວາມຫຍຸ້ງຍາກໃນການຈັດຕັ້ງປະຕິບັດ ແລະ ກຳນົດເພີ່ມ

ອ່ານຕໍ່ໜ້າ 6

ເຫດຜົນປັບປຸງກົດໝາຍນາຍທະຫານກອງທັບປະຊາຊົນລາວ



(ສພຊ) - ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ X ຄັ້ງວັນທີ 13 ຕຸລານີ້, ທ່ານ ພົທ. ວິງສອນ ອິນປານພົມ ຮອງລັດຖະມົນຕີກະຊວງປ້ອງກັນປະເທດ, ຫົວໜ້າກົມໃຫຍ່ການເມືອງກອງທັບ ໄດ້ສະເໜີປັບປຸງກົດໝາຍວ່າດ້ວຍນາຍທະ

ອ່ານຕໍ່ໜ້າ 6

ທຸລະກິດເຄື່ອງດື່ມທີ່ມີທາດເຫຼົ້າ ຈະໄດ້ຮັບການຄຸ້ມຄອງ, ຕິດຕາມກວດກາຢ່າງເຂັ້ມລະບົບ



(ສພຊ) - ໃນກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ X ຄັ້ງວັນທີ 14 ຕຸລາ 2026, ທ່ານ ນາງ ໃບຄຳ ຂັດທິຍະ ລັດຖະມົນຕີກະຊວງສາທາລະນະສຸກ ໄດ້ສະເໜີປັບປຸງກົດໝາຍວ່າດ້ວຍການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ໂດຍຍົກໃຫ້ເຫັນສະພາບຄວາມເປັນມາ, ເຫດຜົນ

ອ່ານຕໍ່ໜ້າ 6

ບາງຄຳເຫັນຕໍ່ແຜນການເຄື່ອນໄຫວປີ 2027 ຂອງສະພາແຫ່ງຊາດ



(ສພຊ) - ວັນທີ 12 ຕຸລານີ້, ທ່ານ ລາວປ່າວຊິງ ນະວົງໄຊ ກຳມະການສູນກາງພັກ, ຮອງປະທານສູນກາງແນວລາວສ້າງຊາດ ໄດ້ຕາງໜ້າຄະນະປະຈຳສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ປະກອບຄຳເຫັນຕໍ່ບົດລາຍງານການ

ອ່ານຕໍ່ໜ້າ 6

ຜັນຂະຫຍາຍຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ X ໃຫ້ປາກົດຜົນເປັນຈິງ!

ຄະນະຜູ້ແທນສະພາແຫ່ງຊາດ ເຂົ້າຮ່ວມກອງປະຊຸມໃຫຍ່ IPU ຄັ້ງທີ 153 ທີ່ຕັ້ງຊານີ



(ສພຊ) - ຄະນະຜູ້ແທນສະພາແຫ່ງຊາດລາວ ນຳໂດຍທ່ານ ໂພໄຊ ໄຂຄຳພິທູນ ປະທານກຳມາທິການການຕ່າງປະເທດ ໄດ້ເຂົ້າຮ່ວມກອງປະຊຸມໃຫຍ່ສະຫະພັນລັດຖະສະພາສາກົນ (IPU) ຄັ້ງທີ 153 ລະຫວ່າງວັນທີ 5-9 ຕຸລາ 2026 ທີ່ນະຄອນອາຣຸຊາ, ສະຫະ ສາທາລະນະລັດ ຕັ້ງຊານີ ເຊິ່ງມີຜູ້ແທນເຂົ້າຮ່ວມກວ່າ 2,000 ຄົນ ຈາກບັນດາປະເທດສະມາຊິກ ແລະ ອົງການຈັດຕັ້ງສາກົນຕ່າງໆ ພາຍໃຕ້ຫົວຂໍ້: “ເສີມຂະຫຍາຍການຄຸ້ມຄອງບໍລິຫານທີ່ດີ ແລະ ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນ ໂດຍການມີສ່ວນຮ່ວມຢ່າງທົ່ວເຖິງ, ຄວາມໄວ້ເນື້ອເຊື່ອໃຈ ແລະ ໂອກາດສຳລັບທຸກຄົນ”.

ພິທີເປີດກອງປະຊຸມຢ່າງເປັນທາງການໃນວັນທີ 5 ຕຸລາ, ທ່ານ ໂພໄຊ ໄຂຄຳພິທູນ ໄດ້ມີຄຳເຫັນວ່າ ການຄຸ້ມຄອງບໍລິຫານທີ່ດີ ຕ້ອງສ້າງຂຶ້ນບົນພື້ນຖານຄວາມໄວ້ເນື້ອເຊື່ອໃຈ ລະຫວ່າງລັດຖະບານ ແລະ ປະຊາຊົນ; ການມີສ່ວນຮ່ວມຢ່າງແທ້ຈິງ, ຄວາມໂປ່ງໃສ, ຄວາມຮັບຜິດຊອບ ແລະ ໂອກາດທີ່ສະເໝີພາບສຳລັບທຸກຄົນ ລວມທັງແມ່ຍິງ, ຊາວໜຸ່ມ, ຄົນພິການ ແລະ ປະຊາຊົນບັນດາເຜົ່າໃນເຂດຫ່າງໄກສອກຫຼີກ. ພ້ອມກັນນີ້, ຍັງແຈ້ງໃຫ້ຮັບຊາບວ່າ ພາຍຫຼັງການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາໃນທ້າຍປີ2026, ສປປລາວ ຈະສືບຕໍ່ສົ່ງເສີມການພັດທະນາທີ່ຖືເອົາປະຊາຊົນເປັນໃຈກາງ ຄຽງຄູ່ກັບການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ, ສີຂຽວ ແລະ ຍືນຍົງ ໃນນີ້, ສະພາແຫ່ງຊາດລາວ ໄດ້ມີບົດບາດສຳຄັນໃນການສ້າງກົດໝາຍ, ຕິດຕາມກວດກາ ແລະ ຮັບຟັງສຽງຂອງປະຊາຊົນຜ່ານສາຍດ່ວນ ແລະ ສື່ມວນຊົນ ເພື່ອຮັບປະກັນໃຫ້ກົດໝາຍ ແລະ ນະໂຍບາຍ ສະທ້ອນເຖິງຄວາມຕ້ອງການຂອງປະຊາຊົນບັນດາເຜົ່າຢ່າງແທ້ຈິງ.

ໂອກາດດຽວກັນ, ທ່ານ ໂພໄຊ ໄຂຄຳພິທູນ ໄດ້ເຂົ້າຮ່ວມກອງປະຊຸມປະສານງານຂອງເຄືອຂ່າຍລັດຖະສະພາຂະບວນການບໍ່ຮ່ວມກຸ່ມ (NAM) ເຊິ່ງເປັນປະທານໂດຍທ່ານ ນາງ ຊາຣິບາ ກາຟາໂຣວາ ປະທານສະພາແຫ່ງຊາດອາແຊກໄບຊານ ເພື່ອປຶກສາຫາລືໃນຂອບການຮ່ວມມືຂອງອົງການດັ່ງກ່າວ; ຄະນະຜູ້ແທນລາວ ຍັງໄດ້ເຂົ້າຮ່ວມ ແລະ ປະກອບຄຳເຫັນໃນກອງປະຊຸມສຳມະນາກ່ຽວກັບ “ການເສີມສ້າງບົດບາດການຕິດຕາມກວດກາຂອງລັດຖະສະພາຕໍ່ວຽກງານຊັບພະຍາກອນແຮ່ທາດທີ່ສຳຄັນ ເພື່ອຄວາມຈະເລີນຮຸ່ງເຮືອງຮ່ວມກັນ” ໂດຍແລກປ່ຽນບົດຮຽນ ແລະ ປະສົບການຂອງສະພາແຫ່ງຊາດລາວ ໃນການຕິດຕາມກວດກາ ການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນແຮ່ທາດ ໃຫ້ມີຄວາມໂປ່ງໃສ ແລະ ຍືນຍົງ.

ກອງປະຊຸມໃຫຍ່ IPU ຄັ້ງນີ້, ຄະນະຜູ້ແທນລາວ ຍັງໄດ້ຮ່ວມພິຈາລະນາແລະໃຊ້ສິດລົງຄະແນນຄັດເລືອກເອົາບັນຫາຮີບດ່ວນຂອງໂລກໃນປັດຈຸບັນ ເພື່ອບັນຈຸເຂົ້າໃນວາລະກອງປະຊຸມທັງໝົດ 3 ຫົວຂໍ້ ຄື: 1. “ການຮັບປະກັນເສລີພາບໃນການເດີນເຮືອ, ຄວາມໝັ້ນຄົງທາງທະເລ ແລະ ການໄຫຼວຽນຂົນສົ່ງສິນຄ້າລະຫວ່າງຊາດຜ່ານຊ່ອງທາງ ແລະ ຊ່ອງແຄບທາງທະເລ ໃຫ້ສອດຄ່ອງກັບກົດໝາຍລະຫວ່າງຊາດ: ການຮຽກຮ້ອງໃຫ້ມີການເຄື່ອນໄຫວຢ່າງຮີບດ່ວນຂອງລັດຖະສະພາ” ສະເໜີໂດຍ: ບາເຮນ; 2. “ການປະນາມການຮຸກຮານທາງການທະຫານຂອງສະຫະລັດອາເມລິກາ ແລະ ອິດສະຣາແອນ ຕໍ່ສາທາລະນະລັດ ອິດສະລາມ ອີຣານ ກໍຄືການປິດລ້ອມທາງອາກາດ ແລະ ທາງນ້ຳ ທີ່ກຳນົດບັງຄັບໃຊ້ໂດຍສະຫະລັດອາເມລິກາ, ໂດຍຖືວ່າເປັນການລະເມີດກົດໝາຍລະຫວ່າງຊາດ ແລະ ຫຼັກການບໍ່ແຊກແຊງກິດຈະການພາຍໃນ”ສະເໜີໂດຍ: ອີຣານ; 3. “ການເຄື່ອນໄຫວຢ່າງຮີບດ່ວນຂອງລັດຖະສະພາເພື່ອຮັບມືກັບໄພພິບັດທາງທຳມະຊາດ ທີ່ຕິດພັນກັບການປ່ຽນແປງດິນຟ້າອາກາດ ແລະ ສ້າງຄວາມເຂັ້ມແຂງໃນພູມິພາກອົ່ມາໄລ ແລະ ພູມິພາກອື່ນໆທີ່ບອບບາງມີຄວາມສ່ຽງ” ສະເໜີໂດຍ: ເນປານ. ຜ່ານການປະຊາມະຕິເຫັນວ່າ ຂໍ້ສະເໜີຂອງເນປານ ກ່ຽວກັບການດຳເນີນງານຢ່າງຮີບດ່ວນຂອງລັດຖະສະພາ ເພື່ອແກ້ໄຂໄພພິບັດທີ່ກ່ຽວຂ້ອງກັບດິນຟ້າອາກາດ ໄດ້ຮັບຄະແນນສຽງສ່ວນຫຼາຍ ແລະ ໄດ້ຮັບການບັນຈຸເຂົ້າໃນວາລະກອງປະຊຸມ.

ພິເສດ, ກອງປະຊຸມສະພາບໍລິຫານ IPU ຄັ້ງທີ 218 ໄດ້ເລືອກຕັ້ງທ່ານ ມິລຕັນ ດິກ ປະທານສະພາຕ່ຳອິດສະຕອນຕາລີ ເປັນປະທານ IPU ຄົນທີ 32 ສະໄໝ 2026-2029 ດ້ວຍຄະແນນສຽງ182ຫຼື56% ຂອງຄະແນນສຽງທັງໝົດ; ກອງປະຊຸມໃຫຍ່ IPU ຄັ້ງທີ 154 ຈະຈັດຂຶ້ນລະຫວ່າງວັນທີ 10-14 ພຶດສະພາ 2027 ທີ່ນະຄອນເຈນີວາ, ສະວິດເຊີແລນ. ນອກນີ້, ກອງປະຊຸມກຸ່ມອາຊຽນ+3ປະເທດບຣູໄນ ດາຣຸຊາລາມ ຈະເປັນປະທານໃນຄັ້ງຕໍ່ໄປ.

ໃນໂອກາດເຂົ້າຮ່ວມກອງປະຊຸມໃຫຍ່ IPU ຄັ້ງນີ້, ທ່ານ ໂພໄຊ ໄຂຄຳພິທູນ ໄດ້ພົບປະສອງຝ່າຍກັບ ທ່ານ ຫງວຽນ ຮົ່ງ ຢຽນ, ຮອງປະທານສະພາແຫ່ງຊາດສສຫວຽດນາມ, ທັງສອງຝ່າຍ ໄດ້ຕີລາຄາສູງຕໍ່ສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານສອງພັກ-ລັດ ກໍຄື ສອງສະພາ ແລະ ເຫັນດີໃນການສືບຕໍ່ສະໜັບສະໜຸນເຊິ່ງກັນ ແລະກັນຢູ່ເວທີ IPU ແລະ AIPA. ພົບປະກັບ ທ່ານ ມໍ ຕັນ ດິກ, ປະທານສະພາຕ່ຳ ອິດສະຕອນຕາລີ ແລະ ພົບປະກັບ ທ່ານ ນາງ ຊາຣິບາ ກາຟາໂຣວາ, ປະທານສະພາແຫ່ງຊາດ ອາແຊກໄບຊານ.

ການເຂົ້າຮ່ວມກອງປະຊຸມຄັ້ງນີ້ ເປັນການປະກອບສ່ວນສຳຄັນໃນການຈັດຕັ້ງປະຕິບັດນະໂຍບາຍການຕ່າງປະເທດ ສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການຮ່ວມມືຂອງພັກ ແລະ ລັດ ສປປລາວ, ພ້ອມທັງຍົກສູງພາລະບົດບາດ ແລະ ພາບພົດຂອງ ສປປລາວ ກໍຄືສະພາແຫ່ງຊາດຢູ່ເວທີລັດຖະສະພາສາກົນໃຫ້ນັບມື້ສູງຂຶ້ນ.

ຮອດປັດຈຸບັນ ແກ້ໄຂຄະດີ 9,597 ເລື່ອງ



(ສພຊ) - ວັນທີ 9 ຕຸລານີ້, ທ່ານ ໄພວີ ສີບົວລີພາ ປະທານສານປະຊາຊົນສູງສຸດ (ສປສສ) ໄດ້ລາຍງານການເຄື່ອນໄຫວວຽກງານປະຈຳປີ 2026 ແລະທິດທາງແຜນການປະຈຳປີ 2027 ຂອງສານປະຊາຊົນສູງສຸດຕໍ່ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ X ໂດຍສະເພາະການພິຈາລະນາແກ້ໄຂຄະດີ ເຊິ່ງທ່ານໃຫ້ຊາບວ່າ: ມີຄະດີຄ້າງມາແຕ່ປີ 2025 3,738 ເລື່ອງ ເຂົ້າໃໝ່ໃນປີ 2026 9,506 ເລື່ອງ ລວມທັງໝົດ 13,244 ເລື່ອງ, ແກ້ໄຂໄດ້ 9,597 ເລື່ອງ ເທົ່າກັບ 72.46%, ສືບຕໍ່ແກ້ໄຂ 3,647 ເລື່ອງ ສາມາດແຍກໃຫ້ເຫັນການແກ້ໄຂຢູ່ສານແຕ່ລະຂັ້ນດັ່ງນີ້:

- ຂັ້ນຕົ້ນ (ສານປະຊາຊົນເຂດ, ນະຄອນຫຼວງ, ແຂວງ ແລະ ສານທະຫານພາກ) ລວມທັງໝົດ 11,002 ເລື່ອງ, ແກ້ໄຂໄດ້ 8,069 ເລື່ອງ ເທົ່າກັບ 73.34%, ມີການຂໍອຸທອນ 948 ເລື່ອງ ເທົ່າກັບ 11.74%;

- ຂັ້ນອຸທອນ (ສານປະຊາຊົນ ນະຄອນຫຼວງ/ແຂວງ, ພາກ ແລະ ສານທະຫານຂັ້ນສູງ) ລວມທັງໝົດ 1,652 ເລື່ອງ, ແກ້ໄຂໄດ້ 1,037 ເລື່ອງ ເທົ່າກັບ 62.77%, ມີການຂໍລຶບລ້າງ 425 ເລື່ອງ ເທົ່າກັບ 40.98%;

- ຂັ້ນລຶບລ້າງ (ສານປະຊາຊົນພາກ ແລະ ສານປະຊາຊົນສູງສຸດ)ລວມທັງໝົດ 590 ເລື່ອງ, ແກ້ໄຂໄດ້ 491 ເລື່ອງ ເທົ່າກັບ 83.22%.

ຄະດີທີ່ເກີດຂຶ້ນຫຼາຍກວ່າໝູ່ແມ່ນຢາເສບຕິດ (ອາຍາ), ຂັດແຍ້ງກ່ຽວກັບທີ່ດິນ (ແພ່ງ), ສັນຍາກູ້ຢືມ (ການຄ້າ).

ນອກຈາກແກ້ໄຂຄະດີສາມຂັ້ນແລ້ວ, ສານປະຊາຊົນສູງສຸດ ຍັງໄດ້ອອກລະບຽບກ່ຽວກັບການຮັບ ແລະ ຂັ້ນຕອນພິຈາລະນາການຮື້ຟື້ນຄະດີ, ຈັດສຳມະນາຖອດຖອນບົດຮຽນກ່ຽວກັບການພິຈາລະນາການຮື້ຟື້ນຄະດີ; ຜ່ານການປະຕິບັດ ໄດ້ຮັບຄຳຮ້ອງຂໍຮື້ຟື້ນຄະດີ 360 ເລື່ອງ, ແກ້ໄຂ 96 ເລື່ອງ, ສືບຕໍ່ແກ້ໄຂ 264 ເລື່ອງ ແລະ ໄດ້ຮັບສຳນວນຄະດີຂຶ້ນຮື້ຟື້ນຈາກອົງການໄອຍະການປະຊາຊົນສູງສຸດ (ອອປສ) 73 ເລື່ອງ, ແກ້ໄຂ 62 ເລື່ອງ, ສືບຕໍ່ແກ້ໄຂ 11 ເລື່ອງ.

ຮັບຄຳສະເໜີຂໍຄຳຊີ້ຂາດໂທດປະຫານຊີວິດ 68 ເລື່ອງ, ແກ້ໄຂໄດ້ 61 ເລື່ອງ, ສືບຕໍ່ແກ້ໄຂ 7 ເລື່ອງ; ພ້ອມກັນນັ້ນ, ກໍໄດ້ແກ້ໄຂບັນຫານັກໂທດຖືກກັກຂັງທີ່ບໍ່ມີຄຳຕັດສິນຕາມໜັງສືສະເໜີຂອງຫົວໜ້າ ອອປສ ເຊິ່ງຜ່ານມາ ສປສສ ໄດ້ແຕ່ງຕັ້ງຄະນະຮັບຜິດຊອບລົງກວດກາ ແລະ ແກ້ໄຂສຳເລັດ ໂດຍສະເພາະຢູ່ສານປະຊາຊົນນະຄອນຫຼວງວຽງຈັນ ໄດ້ກວດ ແລະ ຂຽນຄຳຕັດສິນສົ່ງໃຫ້ຄ້າຍຄຸມຂັງດັດສ້າງ 119 ເລື່ອງ, ຕໍ່ກັບບັນຫາດັ່ງກ່າວ ຍັງຈະສືບຕໍ່ປະສານສົມທົບກັບບັນດາຄ້າຍຄຸມຂັງດັດສ້າງ ແລະ ອົງການໄອຍະການປະຊາຊົນ ເພື່ອກວດກາຄືນໃຫ້ຖືກຕ້ອງ.

ຄົ້ນຄວ້າຄຳຮ້ອງ-ຄຳສະເໜີຂອງພົນລະເມືອງ ແລະ ພາກສ່ວນຕ່າງໆ ຕໍ່ກັບການປະຕິບັດໜ້າທີ່ຂອງຜູ້ພິພາກສາ ເຊິ່ງມີຄຳຮ້ອງຄ້າງມາແຕ່ປີ 2025 34 ສະບັບ ເຂົ້າໃໝ່ 13 ສະບັບ ລວມທັງໝົດ 47 ສະບັບ,ຄົ້ນຄວ້າແກ້ໄຂ40 ສະບັບ, ສືບຕໍ່ແກ້ໄຂ 7 ສະບັບ. ຜ່ານການແກ້ໄຂຟ້ອງວ່າມີຜູ້ພິພາກສາ, ພະນັກງານ-ລັດຖະກອນຢູ່ບັນດາສານປະຊາຊົນ ມີຜິດຕິກຳທີ່ຜິດຕໍ່ລະບຽບກົດໝາຍ ຈຶ່ງໄດ້ປະຕິບັດວິໄນໂດຍການລຶບຊື່ອອກຈາກການເປັນພະນັກງານ 3 ຄົນ ແລະ ກ່າວຕັກເຕືອນຈຳນວນໜຶ່ງ, ສ່ວນຄຳຮ້ອງທີ່ບໍ່ມີເຫດຜົນ ກໍໄດ້ແຈ້ງຕອບ ແລະ ເຈົ້າຂອງຄຳຮ້ອງຈຳນວນໜຶ່ງ ກໍໄດ້ມາຖອນ; ພ້ອມກັນນັ້ນ, ກໍສຸມໃສ່ກວດກາ ແລະ ປະເມີນຜູ້ພິພາກສາດີ-ເກັ່ງ ໂດຍໄດ້ແຕ່ງຕັ້ງຄະນະຮັບຜິດຊອບໃນການລົງກວດກາ ແລະ ປະເມີນ, ໄດ້ແຈ້ງການໃຫ້ສານປະຊາຊົນທ້ອງຖິ່ນທົ່ວປະເທດ ຕິດຕາມ ແລະ ປະເມີນເປັນແຕ່ລະໄລຍະແຕ່ຫົວທີ ເພື່ອຮັບປະກັນໃຫ້ໄດ້ຜູ້ພິພາກສາດີ-ເກັ່ງທີ່ແທ້ຈິງ.

ກວດເຫັນຫຼາຍຂົງເຂດ ເຮັດໃຫ້ລັດເສຍຜົນປະໂຫຍດເປັນເງິນມະຫາສານ



(ສພຊ) - ວັນທີ 8 ຕຸລານີ້, ທ່ານ ວຽງທະວີ ສອນ ເທບພະຈັນ ປະທານອົງການກວດສອບແຫ່ງລັດ ໄດ້ລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2026, ບົດລາຍງານຜົນການກວດສອບປະຈຳປີ 2026 ແລະ ແຜນການເຄື່ອນໄຫວວຽກງານປະຈຳປີ 2027 ຂອງອົງການກວດສອບແຫ່ງລັດ ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ X ເຊິ່ງທ່ານໃຫ້ຮູ້ວ່າ: ຜ່ານການຕິດຕາມ, ຊຸກຍູ້ ແລະ ກວດສອບຄືນ ການແກ້ໄຂຜົນການກວດສອບໃນປີ2026 ມີຄວາມຄືບໜ້າດັ່ງນີ້:

ຂົງເຂດງົບປະມານແຫ່ງລັດ: ບັນຫາທີ່ຕ້ອງໄດ້ແກ້ໄຂລວມມີ ລາຍຮັບ-ລາຍຈ່າຍທີ່ກວດສອບເຫັນເພີ່ມ, ໜີ້ຕ້ອງຮັບສ່ວຍສາອາກອນ, ໜີ້ຕ້ອງຮັບຊັບສິນ, ຄ່າຊັບພະຍາກອນ, ເງິນປັນຜົນ, ເງິນຮັກສາໄວ້ໃນບັນຊີລໍຖ້າ ແລະ ບັນຫາອື່ນໆ 14,124.88 ຕື້ກີບ ແລະ 25.42 ລ້ານໂດລາ ໃນນັ້ນ: ແກ້ໄຂໄດ້ 5,577.68 ຕື້ກີບ ແລະ 3.75 ລ້ານໂດລາ ເທົ່າກັບ 38.57% ຂອງຈຳນວນທີ່ຕ້ອງແກ້ໄຂ, ຍັງຄ້າງ 8,547.19 ຕື້ກີບ ແລະ 21.67 ລ້ານໂດລາ; ເລັ່ງທວງເອົາເງິນຈາກໜີ້ຕ້ອງຮັບ ມອບເຂົ້າງົບປະມານແຫ່ງລັດ 3,417.84 ຕື້ກີບ ແລະ 3.70 ລ້ານໂດລາ, ເງິນຈ່າຍລ່ວງໜ້າໃນລະບົບຄັງເງິນ ແລະ ບັນຫາອື່ນໆ ດ້ວຍການຈັດຮັບ-ຈັດຈ່າຍ 2,159.84 ຕື້ກີບ; ຍັງບໍ່ໄດ້ຮັບການແກ້ໄຂ ມີທັງໝົດ 7 ມາດຕະການ ຕິດພັນກັບ 6 ກະຊວງ-ອົງການ, 2 ແຂວງ ແລະ ນະຄອນຫຼວງ.

ຂົງເຂດໂຄງການເງິນກູ້ຢືມ ແລະ ຊ່ວຍເຫຼືອລ້າ: ບັນຫາທີ່ຕ້ອງໄດ້ແກ້ໄຂລວມມີ ການເກັບເງິນຄືນຈາກການຈ່າຍເງິນເກີນລະບຽບການ ແລະ ບໍ່ມີເອກະສານຢັ້ງຢືນ, ການມອບອາກອນມູນຄ່າເພີ່ມ, ອາກອນລາຍໄດ້, ການມອບເງິນຄືນຈາກການຈ່າຍຊ້ຳຊ້ອນ, ລາຍຮັບຈາກການຈົດທະບຽນເອກະສານ, ການສັ່ງລວມມູນຄ່າຕົ້ນທຶນຊັບສິນບັດທີ່ເຂົ້າໃນບົດສະຫຼຸບບັນຊີ ແລະ ບັນຫາອື່ນໆ 81.26 ຕື້ກີບ ໃນນັ້ນ: ແກ້ໄຂໄດ້ 52.10 ຕື້ກີບ ເທົ່າກັບ 64.11% ຂອງຈຳນວນທີ່ຕ້ອງແກ້ໄຂ, ຍັງຄ້າງ 29.16 ຕື້ກີບ.

ຂົງເຂດວິສາຫະກິດ: ບັນຫາທີ່ຕ້ອງໄດ້ແກ້ໄຂ ລວມມີການມອບອາກອນກຳໄລ, ອາກອນລາຍໄດ້, ອາກອນມູນຄ່າເພີ່ມ, ການເລັ່ງທວງໜີ້ຕ້ອງຮັບ, ການສະສາງໜີ້ຕ້ອງສົ່ງ, ການສັ່ງລວມລາຍຮັບ, ມູນຄ່າຕົ້ນທຶນຊັບສິນບັດທີ່ເຂົ້າໃນເອກະສານລາຍງານການເງິນ 1,963.16 ຕື້ກີບ ໃນນັ້ນ: ແກ້ໄຂໄດ້ 1,760.60 ຕື້ກີບ ເທົ່າກັບ 89.68 % ຂອງຈຳນວນທີ່ຕ້ອງແກ້ໄຂ, ຍັງຄ້າງ 202.56 ຕື້ກີບ.

ຂົງເຂດທະນາຄານ: ບັນຫາທີ່ຕ້ອງໄດ້ແກ້ໄຂ ລວມມີ ການເກັບກູ້ເງິນທີ່ປ່ອຍເກີນ 25% ຂອງທຶນຊັ້ນໜຶ່ງ, ເງິນທີ່ໄດ້ຈ່າຍແທນບໍລິສັດຈາກການຄ้ำປະກັນສັນຍາ, ການມອບອາກອນມູນຄ່າເພີ່ມ, ອາກອນກຳໄລ, ການຕິດຕາມການປະຕິບັດເງື່ອນໄຂສັນຍາເງິນກູ້ຂອງທະນາຄານແຫ່ງ ສປປລາວ ແລະ ບັນຫາອື່ນໆ 14,345.52 ຕື້ກີບ ໃນນັ້ນ: ແກ້ໄຂໄດ້ 3,853.01 ຕື້ກີບ ເທົ່າກັບ 26.86% ຂອງຈຳນວນທີ່ຕ້ອງແກ້ໄຂ, ຍັງຄ້າງ 10,452.92 ຕື້ກີບ.

ໃນປີ2026 ມີແຜນການກວດສອບ (ຂອງປີ 2025) 147 ເປົ້າໝາຍ, ປະຕິບັດສຳເລັດ 105 ເປົ້າໝາຍ ເທົ່າກັບ 71.43% ເຊິ່ງມີລາຍລະອຽດຄື:

ຂົງເຂດງົບປະມານແຫ່ງລັດ:

+ ດ້ານລາຍຮັບງົບປະມານ: ກວດສອບເຫັນລາຍຮັບ ແລະ ໜີ້ຕ້ອງຮັບ 7,339.38 ຕື້ກີບ;

- ຄ้ำງສະສາງ ແລະ ຈັດສົ່ງເງິນໃນບັນຊີລໍຖ້າ 3,255.58 ຕື້ກີບ;

- ຝຶບເຫັນ 10 ແຂວງເກັບຜົນທະອາກອນ ແລະ ຄ່າທຳນຽມບໍ່ຄົບຖ້ວນ ເຊິ່ງຕ້ອງໄດ້ເກັບເພີ່ມ 54.46 ຕື້ກີບ ແລະ 959,157.14 ໂດລາ;

- ການຄຸ້ມຄອງຄ่ำບິນຜ່ານ 22.31 ລ້ານໂດລາ ແລະ ຊຳລະຄ่ำບິນຜ່ານບໍ່ຄົບຖ້ວນ 10,123.36 ໂດລາ;

- ກວດເຫັນ 223 ໂຄງການຂຸດຄົ້ນແຮ່ທາດ ເຊິ່ງຕ້ອງໄດ້ຄິດໄລ່ມອບຜົນທະເພີ່ມ 1.77 ລ້ານໂດລາ ແລະ 3.77 ຕື້ກີບ;

- ກວດສອບເຫັນເຂື່ອນໄຟຟ้າຂັ້ນສູນກາງ ແລະ ທ້ອງຖິ່ນ 20 ເຂື່ອນ ຄ้ำງມອບ ແລະ ມອບຄ่ำພາກຫຼວງບໍ່ຄົບຖ້ວນ 20.35 ລ້ານໂດລາ ແລະ 5.81 ຕື້ກີບ, 5 ເຂື່ອນ ທີ່ດຳເນີນການຜະລິດ ແລະ ຂາຍພະລັງງານໄຟຟ้າຮອດ ປີ 2025 ມີມູນຄ่າຈາກການຂາຍ 5,232.95 ຕື້ກີບ ຍັງບໍ່ໄດ້ເຊັນສັນຍາສຳປະທານ ເຮັດໃຫ້ບໍ່ມີບ່ອນອີງໃນການຄິດໄລ່ເພື່ອເກັບຄ่ำພາກຫຼວງ ແລະ ຜົນທະອື່ນໆ ເຂົ້າງົບປະມານແຫ່ງລັດໄດ້ (ຍັງບໍ່ໄດ້ເກັບ), 2 ເຂື່ອນ (ຂັ້ນທ້ອງຖິ່ນຄຸ້ມຄອງ) ທີ່ດຳເນີນການຜະລິດ ແລະ ຂາຍພະລັງງານໄຟຟ้າແຕ່ປີ2021-2025 ຈຳນວນ 66.84 ລ້ານໂດລາ ຊັ້ນແຂວງເຊັນສັນຍາຍົກເວັ້ນການຈັດເກັບຄ่ำພາກຫຼວງ ເຮັດໃຫ້ລັດຖະບານເສຍຜົນປະໂຫຍດ 3.34 ລ້ານໂດລາ, 9 ເຂື່ອນ ຄ้ำງມອບຄ่ำເຊ่ົາ ແລະ ສຳປະທານທີ່ດິນຈາກເຂື່ອນໄຟຟ้າ 192,075 ໂດລາ;

- ການຈັດເກັບລາຍຮັບຈາກກິດຈະການໂທລະຄົມບໍ່ຄົບຖ້ວນ 7.19 ຕື້ກີບ.

+ ດ້ານລາຍຈ່າຍງົບປະມານ: ກວດສອບເຫັນລາຍຈ່າຍນອກແຜນງົບປະມານແຫ່ງລັດເຂົ້າໃນວຽກງານບໍລິຫານປົກກະຕິ 78.26 ຕື້ກີບ, ການນຳໃຊ້ເງິນເກີນແຜນປີ2024 ບໍ່ຖືກເປົ້າໝາຍ ແລະ ບໍ່ຖືກຕາມເງື່ອນໄຂການຊຳລະ 12.97 ຕື້ກີບ, 4 ໂຄງການລົງທຶນຂອງລັດ ມີໜ້າວຽກບໍ່ໄດ້ຈັດຕັ້ງປະຕິບັດ ແລະ ຄິດໄລ່ບໍ່ລຶມາດໜ້າວຽກເກີນຕົວຈິງ 3.60 ຕື້ກີບ, 1 ໂຄງການ ມູນຄ่າການກໍ່ສ้າງ 153.42 ຕື້ກີບ ເຊິ່ງສູງກວ่າລาคากลาง 57.82 ຕື້ກີບ.

ຂົງເຂດໂຄງການເງິນກູ້ຢືມ ແລະ ຊ່ວຍເຫຼືອລ້າ: ກວດສອບເຫັນ 3 ໂຄງການ ຈັດຊື້ ແລະ ເບີກຈ່າຍເງິນບໍ່ສອດຄ່ອງກັບລະບຽບການ 1.37 ຕື້ກີບ, 3 ໂຄງການ ມອບອາກອນມູນຄ่າເພີ່ມ ແລະ ອາກອນກຳໄລ ບໍ່ຄົບຖ້ວນ 3 ຕື້ກີບ ແລະ 4 ໂຄງການ ຈ่າຍເງິນເກີນໜ້າວຽກທີ່ບໍ່ໄດ້ປະຕິບັດ ແລະ ປະຕິບັດບໍ່ຄົບຖ້ວນ, ໂຄງການຊັກຊ้າ, ບໍ່ໄດ້ນຳສັນຍາຮັບເໝົ້ານ້ຳ້ສ้າງ ແລະ ສັນຍາວ่าจ้างที่ปึกสา ไปจົດທະບຽນເອກະສານເຊິ່ງຕ້ອງໄດ້ປັບໃໝ ແລະ ເກັບກູ້ຄືນເງິນເຂົ້າງົບປະມານແຫ່ງລັດ 153.90 ລ້ານກີບ.

ຂົງເຂດວິສາຫະກິດ: ກວດສອບເຫັນ 8 ວິສາຫະກິດ ມອບອາກອນລາຍໄດ້, ອາກອນມູນຄ่າເພີ່ມ, ອາກອນກຳໄລ, ເງິນປັນຜົນຈາກກຳໄລສຸດທິ ແລະ ຄ่າປັບໃໝບໍ່ຄົບຖ້ວນ 13.88 ຕື້ກີບ; ວິສາຫະກິດຮ่วมทຶນລະຫວ่างລັດ-ເອກະຊົນ ໄດ້ກູ້ຢືມເງິນຈາກບໍລິສັດເອກະຊົນ, ບຸກຄົນ 38.22 ຕື້ກີບ ໄປປ່ອຍກູ້ຕ่ำ 10.87 ຕື້ກີບ ແລະ ນຳໃຊ້ພາຍໃນ 27.35 ຕື້ກີບ ໂດຍບໍ່ໄດ້ຮັບອະນຸຍาดจากกะซวงการเงิน ແລະ ບໍ່ສອດຄ່ອງກັບໃບອະນຸຍาดดำเนินทุละกิด.

ຂົງເຂດທະນາຄານ: ກວດສອບເຫັນ 2 ທະນาคาน ມອບອາກອນກຳໄລ ບໍ່ຄົບຖ້ວນ 5.24 ຕື້ກີບ; 1 ທະນาคาน ມอบอากอนลายได้ ແລະ ອากอนมูนค่าเพิ่มบ่ดบถ้วน 1.04 ตื้กีบ; 2 ทะนาคาน บ่เข้ามางอดในการป่อยสินเชื่อ, ມีการอะนุมัดเงินกู้ 25 สัญญา เกิน 25% ของทุนชั้นหนึ่ง มูนค่า 8,446.18 ตื้กีบ.

ການດຳເນີນຄະດີ ໃຫ້ຮັບປະກັນຄວາມຖືກຕ້ອງຕາມກົດໝາຍ



(ສພຊ) - ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊาด (ສພຊ) ຊຸດທີ X ຄັ້ງວັນທີ 9 ຕຸລານີ້, ທ่าน นาง ทุมมาลี วົງພະຈັນ ປະທານກຳມาທິการกิดหมาย ແລະ ຍຸຕິທຳ ໄດ้ตางหน้าคะนะปะจำสะพาแห่งชาด ມີຄຳເຫັນຕໍ່ບົດລายงาน ของอົງการไอยะการปะชาชืนสูงสุด (ออปส) ແລະ สานปะชาชืนสูงสุด (สูปสส) ก่วอกับการเถื่อนไหวอวฺกงานปะจำปี 2026 ແລະ ทิดทาง แผนการเถื่อนไหวอวฺกงานปะจำปี 2027 ເຊິ່ງໄດ้สะเหนิบางมาดตะการเพิ่มเติ่มดังนี้:

ต่อองการไอยะการ: 1) ยกสูงคอามรับผิดชอบการเมืองใน การปะติบัดพาละบดบาด สั่งฟ้องผู้ถูกหาขึ้นสาน ແລะ ติดตามกวด กาการเถ่าลืบ ແລะปะติบัดกิดหมายในการดำเนินคะดีตามขะบอนยุติทำ ใหเข้มงวด; 2) ปับปุงกงจักกานจัดตั้งให้มีคอามเข้มแขง, บำลุงสางพะนักงาน-ลัดถะกอนให้มีคุนทาดการเมืองหมักแหม้น, มีคุนสมบัดสิมทำปะติอัด, มีจันยาบัน, จันยาทำตามคำขอัน 3 มิ 4 รับปะกัน ติดแหม้นกับการสางพะนักงานไอยะการมืออาชีบ; 3) บุกทะลุทางด้านจินตะนาการ ແລะ ผืดติกำ ต่การแก้ไขจุดอ่อนคางค้าง เป็นต้น: การติดตามกวดกาการปะติบัดกิดหมายในการสั่งฟ้องผู้ถูกหาขึ้นสาน, ของอົงการสืบสอน-สอบสอน, การดำเนินคะดีอู่สาน, การปะติบัดคำตัดสินของสาน, ແລะ ในสะถานที่กักตือ, กักขัง, ค้ายดัดสาง ແລะ ค้ายคุมขัง ให้มีการหันปรุนอย่างตั้งหน้า.

ต่สานปะชาชืน: 1) เพิ่มทะวิการสึกสาอิบธึมการเมือง-แมวคิด, จันยาบัน, จันยาทำ ให้แก่ผู้พิพากสา, พะนักงาน-ลัดถะกอนติดแหม้นกับการปะเมินผู้พิพากสาดี-เก่ง ให้เข้มงวด; 2) การแต่งตั้งผู้พิพากสา ต้องคึ่นคอ้าให้ละอຽดเลิกเชิ่ง, ธับปะกันมาดตะถาน ແລะ เงื่อนไขตามกิดหมาย ແລะ มีการติดตามกวดกาการปะติบัดหน้าที่ให้เป็นปึกกะติ; 3) ยกสูงคอามธับผิดชอบการเมืองในการปะติบัดหน้าที่อวฺกงาน, การดำเนินคะดีให้ธับปะกันหูกาการพื้นถาน ของการดำเนินคะดีตามกิดหมาย เธัดให้ปะชาชืนลาอบันดาเผ่ามีคอามเชื่อหมั่น ແລะ สัดทาต่การดำเนินคะดีของสาน ปะชาชืนแต่ละขั้น; 4) ปะสานสิมทิบกับพากส่วนที่กำ่วอข้อง คึ่นคอ้าสัญญาว่าจ้างที่ปึกสา ไปจดทะบียนเอกะสานเชิ่งต้องได้ปับใหม ແລะ เกับกู้คืนเงินเข้างบปะมานแห่งลัด 153.90 ล้านกีบ.


ขึงเขดอิสาหะกิด: กวดสอบเห็น 8 อิสาหะกิด มอบอากอนลายได้, อากอนมูนค่าเพิ่ม, อากอนกำไล, เงินปันผึนจากกำไลสุดที่ ແລะ ค่าปับใหมบ่ดบถ้วน 13.88 ตื้กีบ; อิสาหะกิดร่วมทุนละหว่างลัด-เอกะชน ได้กู้ยืมเงินจากบໍลิสัดเอกะชน, บุกคน 38.22 ตื้กีบ ไปป่อยกู้ต่ำ 10.87 ตื้กีบ ແລะ นำใช้พายใน 1 ทะนาคาน มอบอากอนกำไล บ่ดบถ้วน 5.24 ตื้กีบ; 1 ทะนาคาน มอบอากอนลายได้ ແລะ อากอนมูนค่าเพิ่มบ่ดบถ้วน 1.04 ตื้กีบ; 2 ทะนาคาน บ่เข้ามางอดในการป่อยสินเชื่อ, มีการอะนุมัดเงินกู้ 25 สัญญา เกิน 25% ของทุนชั้นหนึ่ง มูนค่า 8,446.18 ตื้กีบ.

ต่สานปะชาชืน: 1) เพิ่มทะวิการสึกสาอิบธึมการเมือง-แมวคิด, จันยาบัน, จันยาทำ ให้แก่ผู้พิพากสา, พะนักงาน-ลัดถะกอนติดแหม้นกับการปะเมินผู้พิพากสาดี-เก่ง ให้เข้มงวด; 2) การแต่งตั้งผู้พิพากสา ต้องคึ่นคอ้าให้ละอຽดเลิกเชิ่ง, ธับปะกันมาดตะถาน ແລะ เงื่อนไขตามกิดหมาย ແລะ มีการติดตามกวดกาการปะติบัดหน้าที่ให้เป็นปึกกะติ; 3) ยกสูงคอามธับผิดชอบการเมืองในการปะติบัดหน้าที่อวฺกงาน, การดำเนินคะดีให้ธับปะกันหูกาการพื้นถาน ของการดำเนินคะดีตามกิดหมาย เธัดให้ปะชาชืนลาอบันดาเผ่ามีคอามเชื่อหมั่น ແລะ สัดทาต่การดำเนินคะดีของสาน ปะชาชืนแต่ละขั้น; 4) ปะสานสิมทิบกับพากส่วนที่กำ่วอข้อง คึ่นคอ้าสัญญาว่าจ้างที่ปึกสา ไปจดทะบียนเอกะสานเชิ่งต้องได้ปับใหม ແລะ เกับกู้คืนเงินเข้างบปะมานแห่งลัด 153.90 ล้านกีบ.

ขึงเขดอิสาหะกิด: กวดสอบเห็น 8 อิสาหะกิด มอบอากอนลายได้, อากอนมูนค่าเพิ่ม, อากอนกำไล, เงินปันผึนจากกำไลสุดที่ ແລะ ค่าปับใหมบ่ดบถ้วน 13.88 ตื้กีบ; อิสาหะกิดร่วมทุนละหว่างลัด-เอกะชน ได้กู้ยืมเงินจากบໍลิสัดเอกะชน, บุกคน 38.22 ตื้กีบ ไปป่อยกู้ต่ำ 10.87 ตื้กีบ ແລะ นำใช้พายใน


ขึงเขดทะนาคาน: กวดสอบเห็น 2 ทะนาคาน มอบอากอนกำไล บ่ดบถ้วน 5.24 ตื้กีบ; 1 ทะนาคาน มอบอากอนลายได้ ແລะ อากอนมูนค่าเพิ่มบ่ดบถ้วน 1.04 ตื้กีบ; 2 ทะนาคาน บ่เข้ามางอดในการป่อยสินเชื่อ, มีการอะนุมัดเงินกู้ 25 สัญญา เกิน 25% ของทุนชั้นหนึ่ง มูนค่า 8,446.18 ตื้กีบ.

ຄະນະຜູ້ແທນສະພາແຫ່ງຊາດ ເຂົ້າຮ່ວມກອງປະຊຸມ ເອທີສະມາຊິກລັດຖະສະພາເພດຍິງໂລກ



(ສພຊ) - ລະຫວ່າງ ວັນທີ12-13ຕຸລາ2026, ຄະນະຜູ້ແທນສະພາແຫ່ງ ຊາດ ແຫ່ງ ສປປລາວ ນຳ ໂດຍທ່ານ ນາງ ທຸມມາລີ ວົງພະຈັນ ປະທານກຳມາ ທິການກົດໝາຍ ແລະ ຍຸ ຕິທຳ, ປະທານຄະນະສະມາ ຊິກສະພາແຫ່ງຊາດເພດຍິງ ໄດ້ເຂົ້າຮ່ວມກອງປະຊຸມເວ ທີສະມາຊິກລັດຖະສະພາ ເພດຍິງໂລກ ໃນຫົວຂໍ້: “ຈາກການມີສ່ວນຮ່ວມ ໃນຖານະຕົວແທນ ສູ່ການ ມີອິດທິພົນຕໍ່ຂະບວນການ ຕົກລົງບັນຫາ” ທີ່ນະຄອນ ຫຼວງອູລານບາຕໍ, ປະເທດ ມົງໂກລີ ເຊິ່ງຈັດຂຶ້ນພາຍ ໃຕ້ການສະໜັບສະໜຸນ ຂອງປະທານາທິບໍດີມົງໂກ ລີ ໂດຍມີບັນດາຄະນະຜູ້ ແທນຈາກລັດຖະສະພາ 32 ປະເທດ ແລະ 9 ອົງ ການຈັດຕັ້ງສາກົນ ເຂົ້າ ຮ່ວມຫຼາຍກວ່າ 360 ທ່ານ; ກອງປະຊຸມໄດ້ໄຂ ຂຶ້ນຢ່າງເປັນທາງການໂດຍ ການໃຫ້ກຽດເຂົ້າຮ່ວມ ແລະ ກ່າວເປີດຂອງທ່ານ ໂອຄະນາ ຄູເຣລສຸກ (U.Khurelsukh) ປະທາ ນາທິບໍດີແຫ່ງມົງໂກລີ, ທ່ານ ບຽມບັດດອກ ຊັນ ດັກ (Byambatdogt Sandag) ປະທານສະພາ ຄູຣານໃຫຍ່ແຫ່ງມົງໂກລີ ໄດ້ກ່າວຕ້ອນຮັບ ແລະ ທ່ານ ນາງ ບັດເຊັດເຊັກ (B.Battsetseg) ສະມາ ຊິກສະພາຄູຣານໃຫຍ່, ລັດ ຖະມົນຕີກະຊວງການຕ່າງ ປະເທດ ເປັນປະທານດຳ ເນີນກອງປະຊຸມ ເຊິ່ງໄດ້ ປຶກສາຫາລື ແລະ ແລກ ປ່ຽນຄຳເຫັນກ່ຽວກັບການ ສົ່ງເສີມການປົກຄອງທີ່ເອົາ ໃຈໃສ່ຄວາມສະເໝີພາບ ລະຫວ່າງຍິງ-ຊາຍ ແລະ ການເປັນຜູ້ນຳໃນລັດຖະ ສະພາ ໃຫ້ເປັນຮູບປະທຳ.

ທ່ານ ນາງ ທຸມມາລີ ວົງພະຈັນ ຫົວໜ້າຄະນະຜູ້ ແທນລາວ ໄດ້ມີຄຳເຫັນ ໂດຍຕີລາຄາສູງຕໍ່ຫົວຂໍ້ ກອງປະຊຸມ: “ຈາກການມີ ສ່ວນຮ່ວມໃນຖານະຕົວ ແທນ ສູ່ການມີອິດທິພົນຕໍ່ ຂະບວນການຕົກລົງບັນ ຫາ” ເຊິ່ງເປັນຫົວຂໍ້ທີ່ມີ ຄວາມໝາຍສຳຄັນ ແລະ ສອດຄ່ອງກັບພາລະບົດ ບາດໜ້າທີ່ຂອງອົງການນິ ຕິບັນຍັດ. ທ່ານຍົກໃຫ້ ເຫັນຄວາມພະຍາຍາມຂອງ ລັດຖະບານ ກໍຄືສະພາແຫ່ງ ຊາດ ແຫ່ງ ສປປລາວ ໃນ ຖານະເປັນຕົວແທນແຫ່ງ ສິດ ແລະ ຜົນປະໂຫຍດ ຂອງປະຊາຊົນບັນດາເຜົ່າ ໄດ້ເອົາໃຈໃສ່ຜັນຂະຫຍາຍ ແຜນປະຕິບັດງານຂອງສະ ຫະພັນລັດຖະສະພາສາກົນ (IPU) ປີ 2025 ວ່າດ້ວຍ ຄວາມສະເໝີພາບລະຫວ່າງ ຍິງ-ຊາຍ ເຂົ້າໃນວຽກງານ ຂອງສະພາແຫ່ງຊາດ, ການ ຜັນຂະຫຍາຍເປົ້າໝາຍ ການພັດທະນາແບບຍືນຍົງ (SDGs) ທີ 5 ເຂົ້າໃນ ແຜນພັດທະນາເສດຖະ ກິດ-ສັງຄົມແຫ່ງຊາດ 5 ປີ (2026-2030)ແລະການ ຈັດຕັ້ງຜັນຂະຫຍາຍແຜນ ດຳເນີນງານຂອງກອງປະ ຊຸມສະມັດຊາໃຫຍ່ລັດຖະ ສະພາລະຫວ່າງຊາດອາຊຽນ (AIPA) ວ່າດ້ວຍການສົ່ງ ເສີມການມີສ່ວນຮ່ວມທາງ ການເມືອງ ແລະ ຄວາມ ເປັນຜູ້ນຳຂອງເພດຍິງ (WPPL 2024-2030); ທ່ານຍັງຍົກໃຫ້ເຫັນຄວາມ ສຳຄັນຂອງເພດຍິງໃນການ ປະກອບສ່ວນເຂົ້າໃນທຸກ ຂົງເຂດວຽກງານ ພ້ອມທັງ ຮຽກຮ້ອງໃຫ້ບັນດາປະເທດ ສະມາຊິກ IPU ສືບຕໍ່ເພີ່ມ ທະວີການຮ່ວມມື, ສະໜັບ ສະໜຸນທາງດ້ານວິຊາການ, ທຶນຮອນ ແລະ ແລກປ່ຽນ ບົດຮຽນທີ່ດີນຳກັນ ເພື່ອ ຊຸກຍູ້ສົ່ງເສີມໃຫ້ເພດຍິງມີ ບົດບາດ ແລະ ອິດທິພົນ ຢ່າງແທ້ຈິງ ໃນການເປັນ ຕົວແທນຂອງປະຊາຊົນ ເພື່ອປະຕິບັດບົດບາດດ້ານ ນິຕິບັນຍັດ ກໍຄືການມີສ່ວນ ຮ່ວມໃນການຕັດສິນບັນ ຫາສຳຄັນຂອງປະເທດຊາດ ໃຫ້ນັບມື້ເຂັ້ມແຂງ ເພື່ອ ນຳເອົາຜົນປະໂຫຍດຢ່າງ ແທ້ຈິງມາສູ່ປະຊາຊົນ.



ອັດຕາຂໍອຸທອນຄະດີອາຍາ 10.21%ແລະ ຂໍລົບລ້າງ 3.24%



(ສພຊ)-ທ່ານ ພ.ຈ.ອ. ນາງ ລີວົງ ລາວລີ ຫົວໜ້າ ອົງການໄອຍະການປະຊາ ຊົນສູງສຸດ ໄດ້ລາຍງານການ ຈັດຕັ້ງປະຕິບັດແຜນການ ເຄື່ອນໄຫວວຽກງານໄອ ຍະການປະຊາຊົນ ປະຈຳປີ 2026 ແລະ ທິດທາງແຜນ ການເຄື່ອນໄຫວປະຈຳປີ 2027 ຕໍ່ກອງປະຊຸມສະ ໄໝສາມັນເທື່ອທີ 2 ຂອງ ສະພາແຫ່ງຊາດ ຊຸດທີ X ເມື່ອວັນທີ 9 ຕຸລານີ້ ເຊິ່ງ ໄດ້ຍົກໃຫ້ເຫັນຜົນສຳເລັດ ຫຼາຍດ້ານ ໂດຍສະເພາະ ວຽກງານຕິດຕາມກວດກາ ການປະຕິບັດກົດໝາຍຂອງ ບັນດາອົງການຕ່າງໆໃນຂະ ບວນຍຸຕິທຳແມ່ນດີຂຶ້ນ ເປັນຕົ້ນ ການດຳເນີນຄະດີ ຕໍ່ຜູ້ກະທຳຜິດກ່ຽວກັບຂົງ ເຂດປ່າໄມ້ ແລະ ສິ່ງແວດ ລ້ອມ, ໃນຂໍ້ຫາສໍ້ລາດບັງ ຫຼວງ ກໍນັບມື້ມີຄວາມເຂັ້ມ ງວດຂຶ້ນກວ່າເກົ່າ, ສາມາດ ສັ່ງຟ້ອງໃຫ້ສານຕັດສິນລົງ ໂທດ ແລະ ຮິບຊັບສິນເຂົ້າ ເປັນຂອງລັດໄດ້ຈຳນວນ ຫຼາຍ; ການດຳເນີນຄະດີມີ ຄຸນນະພາບດີຂຶ້ນ ເປັນຕົ້ນ ການເກັບໂຮມ, ກວດກາ, ຊັ່ງຊາ, ຕີລາຄາຫຼັກຖານ, ການໄຈ້ແຍກອົງປະກອບ ຂອງການກະທຳຜິດ ຂອງ ອົງການສືບສວນ-ສອບ ສວນ, ອົງການໄອຍະການ ປະຊາຊົນ ແລະ ສານປະຊາ ຊົນ ສ່ວນຫຼາຍແມ່ນຖືກ ຕ້ອງ, ສອດຄ່ອງຕາມກົດ ໝາຍ ແລະ ເຫດການຕົວ ຈິງຂອງຄະດີທີ່ເກີດຂຶ້ນ ເຊິ່ງ ອັດຕາຂໍອຸທອນຄະດີອາຍາ ພຽງແຕ່ 10.21% ແລະ ອັດຕາຂໍລົບລ້າງພຽງແຕ່ 3.24% ຖ້າທຽບໃສ່ຄະດີ ອາຍາທີ່ສານຂັ້ນຕົ້ນໄດ້ຕັດ ສິນເອົາຕາມຄຳຖະແຫຼງ ຂອງໄອຍະການ ແລະ ສາ ມາດແກ້ໄຂຄະດີໄດ້ເກີນ 95% ເຊິ່ງບັນລຸຄາດໝາຍ ຕາມມະຕິກອງປະຊຸມສະ ພາແຫ່ງຊາດ ສະບັບເລກ ທີ 175/ສພຊ, ລົງວັນທີ 21 ພະຈິກ 2025.

ການຕິດຕາມກວດ ກາການປະຕິບັດຄຳຕັດສິນ ຂອງສານ ລວມຄະດີແພ່ງ ແລະ ຄະດີອາຍາ ປັດຈຸບັນ ມີ 64,652 ເລື່ອງ; ຍຶດ ຫຼື ອາຍັດຊັບ ເປັນເງິນ 595,830,000 ກີບ, 700,000 ບາດ, ລົດໃຫຍ່ 2 ຄັນ ແລະ ປະເພດໄມ້ 59,677 ແມັດກ້ອນ; ສານ ຕັດສິນຮິບເປັນຂອງລັດ ເປັນເງິນ 38,166,000 ກີບ, 408,420 ບາດ ແລະ ອື່ນໆ. ນອກຈາກນັ້ນ, ຍັງ ໄດ້ແກ້ໄຂຄຳຮ້ອງ, ໜັງສື ສະເໜີ, ໜັງສືທາງລັດຖະ ການ, ແຈ້ງການ, ບົດລາຍ ງານກ່ຽວຂ້ອງກັບການຕິດ ຕາມກວດກາການປະຕິບັດ ຄຳຕັດສິນຂອງສານ ມີຄຳ ຮ້ອງຄ້າງມາ 2 ເລື່ອງ ເຂົ້າ ໃໝ່ 41 ເລື່ອງ ລວມທັງ ໝົດ 43 ເລື່ອງ, ຄົ້ນຄວ້າ ແລ້ວ 43 ເລື່ອງ.

ການຕິດຕາມກວດ ກາການປະຕິບັດກົດໝາຍ ໃນສະຖານທີ່ກັກຕົວ, ກັກ ຂັງ, ສູນດັດສ້າງ, ຄ້າຍດັດ ສ້າງ: ປັດຈຸບັນໃນຂອບ ເຂດທົ່ວປະເທດມີນັກໂທດ 19,782 ຄົນ ຍິງ 2.142 ຄົນ ໃນນັ້ນ ປະກອບມີນັກ ໂທດຢາເສບຕິດ 15,797 ຄົນ ຍິງ 1.854 ຄົນ, ນັກ ໂທດຂໍ້ຫາທົ່ວໄປ 3,985 ຄົນ ຍິງ 288 ຄົນ, ນັກ ໂທດຕ່າງປະເທດ602ຄົນ ຍິງ 58 ຄົນ, ນັກໂທດປະ ຫານຊີວິດ 861 ຄົນ ຍິງ 93 ຄົນ ແລະ ນັກໂທດຕະ ຫຼອດຊີວິດ 1,422 ຄົນ ຍິງ 178 ຄົນ, ຕ່າງປະເທດ 44 ຄົນ ຍິງ 3 ຄົນ; ນອກ ຈາກນັ້ນ, ຍັງມີຜູ້ຖືກຫາ 11,588 ຄົນ ຍິງ 1,175 ຄົນ ໃນນັ້ນ ປະກອບມີຜູ້ ຖືກຫາຂໍ້ຫາຢາເສບຕິດ 9,624 ຄົນ ຍິງ 745 ຄົນ, ຜູ້ຖືກຫາຂໍ້ຫາທົ່ວໄປ 1,964 ຄົນ ຍິງ 430 ຄົນ, ຜູ້ຖືກຫາຕ່າງປະເທດ 1,118 ຄົນ ຍິງ 120 ຄົນ ແລະ ຜູ້ຖືກຫາກັກຂັງເກີນ ກຳນົດ 1 ປີ ມີ 1,273 ຄົນ ຍິງ 179 ຄົນ.

ໃນການເຄື່ອນໄຫວ ຄັ້ງນີ້, ຄະນະຜູ້ແທນສະພາ ແຫ່ງຊາດລາວ ໄດ້ພົບປະ ສອງຝ່າຍກັບປະທານຄະນະ ມິດຕະພາບລັດຖະສະພາຄູ ຣານໃຫຍ່ມົງໂກລີ ແລະ ສະພາແຫ່ງຊາດລາວ ເຊິ່ງ ສອງຝ່າຍໄດ້ຕີລາຄາສູງຕໍ່ ສາຍພົວພັນມິດຕະພາບອັນ ເປັນມູນເຊື້ອ ແລະ ການ ຮ່ວມມືທີ່ດີ ລະຫວ່າງສອງ ປະເທດ ກໍຄືປະຊາຊົນສອງ ຊາດ ເວົ້າລວມ, ເວົ້າສະ ເພາະລະຫວ່າງສອງອົງການ ນິຕິບັດຍັດຂອງສອງປະ ເທດ ທີ່ນັບມື້ໄດ້ຮັບການ ເສີມຂະຫຍາຍໃຫ້ເຂົ້າສູ່ ລວງເລິກ ແລະ ໃນງານ ລ້ຽງຕ້ອນຮັບຈັດໂດຍທ່ານ ປະທານສະພາຄູຣານໃຫຍ່, ຄະນະຜູ້ແທນສະພາແຫ່ງ ຊາດລາວ ຍັງໄດ້ພົບປະປໍ່ ເປັນທາງການກັບທ່ານປະ ທານສະພາຄູຣານໃຫຍ່.

ນອກຈາກນີ້, ຄະນະ ຜູ້ແທນສະພາແຫ່ງຊາດລາວ ຍັງໄດ້ຢ້ຽມຢາມຫໍພິພິທະ ພັນເຈົ້າຈັກກະພັດຈິງກິດ ສະຄານ ເຊິ່ງເປັນສະຖານ ທີ່ທ່ອງທ່ຽວທີ່ມີຊື່ສຽງຂອງ ປະເທດມົງໂກລີ ແລະ ຢ້ຽມ ຢາມສະຖານເອກອັກຄະ ລັດຖະທູດແຫ່ງ ສປປລາວ ປະຈຳມົງໂກລີ ໂດຍມີທ່ານ ຫົງແກ້ວ ສຸກສະຫວັດ ເອກ ອັກຄະລັດຖະທູດແຫ່ງ ສປປລາວ ປະຈຳມົງໂກລີ ໃຫ້ການຕ້ອນຮັບ.

ບາງຄຳເຫັນຂອງ ຄປຈສພຊ ຕໍ່ອົງການກວດສອບ ແລະ ອົງການກວດກາ



(ສພຊ) - ໃນວາລະກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ X ເມື່ອວັນທີ 8 ຕຸລາຜ່ານມາ, ທ່ານ ຈັນທະບຸນ ສຸກອາລຸນ ປະທານກຳມາທິການເສດຖະກິດ ແລະ ການເງິນ ຕາງໜ້າຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ) ມີຄຳເຫັນຕໍ່ບົດລາຍງານຂອງອົງການກວດສອບແຫ່ງລັດ ແລະ ອົງການກວດກາແຫ່ງລັດ ເຊິ່ງຈະຕ້ອງເອົາໃຈໃສ່ແລະສະເໜີບາງມາດຕະການເພີ່ມຕື່ມດັ່ງນີ້:

ຕໍ່ອົງການກວດສອບແຫ່ງລັດ

1) ຈັດຕັ້ງຜັນຂະຫຍາຍບາງມາດຕາຂອງກົດໝາຍວ່າດ້ວຍການກວດສອບແຫ່ງລັດ ໂດຍສະເພາະມາດຕາ 14 ຂໍ້ 3, ມາດຕາ17 ກ່ຽວກັບການກວດສອບຜົນຂອງການຈັດຕັ້ງປະຕິບັດ ໂດຍສະເພາະຕິດພັນກັບການນຳໃຊ້ງົບປະມານແລະຊັບພະຍາກອນ; 2) ສຸມໃສ່ກວດສອບການເກັບລາຍຮັບ ແລະ ການນຳໃຊ້ງົບປະມານ ຂອງຫົວໜ່ວຍງົບປະມານທີ່ຍັງບໍ່ທັນສາມາດແກ້ໄຂຜົນການກວດສອບສຳເລັດ ເພື່ອຈຳແນກໃຫ້ເຫັນວ່າອັນໃດທີ່ຈະບໍ່ສາມາດເກັບກູ້ໄດ້ຄືນ ຫຼື ບໍ່ສາມາດແກ້ໄຂໄດ້ພາຍໃຕ້ນິຕິກຳທີ່ມີຢູ່ ແມ່ນໃຫ້ສະເໜີຕໍ່ອົງການທີ່ມີສິດອຳນາດພິຈາລະນາແກ້ໄຂ; 4) ມີມາດຕະການທີ່ເດັດຂາດ ແລະ ກຳນົດເວລາທີ່ແນ່ນອນ ໃນການເກັບກູ້ຄືນເງິນ, ວັດຖຸອຸປະກອນ, ຊັບສິນຂອງລັດ ທີ່ຕົກເຮ່ຍເສຍຫາຍຕາມຜົນຂອງການກວດສອບທີ່ພົບເຫັນຜ່ານມາ ໃຫ້ສຳເລັດໂດຍໄວ ແລະ ສອດຄ່ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ; 5) ພາຍຫຼັງມີຜົນການກວດສອບເຫັນວ່າອັນໃດຕິດພັນກັບຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງ, ການລະເມີດກົດໝາຍ ຫຼື ລະບຽບການຂອງອົງການຈັດຕັ້ງ ແລະ ພະນັກງານ ຫຼື ເຈົ້າໜ້າທີ່ລັດ ແມ່ນຕ້ອງໄດ້ປະສານ ຫຼື ແຈ້ງເປັນທາງການໃຫ້ອົງການກວດກາແຫ່ງລັດ ສືບຕໍ່ດຳເນີນຕາມກົດໝາຍ ແລະປະຕິບັດລະບຽບວິໄນຕາມກົດລະບຽບຂອງພັກ ໃຫ້ທັນການ. ຕໍ່ທິດທາງແຜນການປະຈຳປີ 2027: 1) ຕ້ອງແກ້ໄຂ 3 ສາເຫດຕົ້ນຕໍທີ່ເຮັດໃຫ້ມີການລະເມີດກົດໝາຍ, ການປ່ອຍປະລະເລີຍຕໍ່ໜ້າທີ່ ລວມທັງວິໄນແຜນການ-ການເງິນຂອງພະນັກງານ ແລະ ເຈົ້າໜ້າທີ່ລັດ ໂດຍສຸມໃສ່ (1) ໃຫ້ຄວາມຮູ້ທາງດ້ານກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ; (2) ເປັນເຈົ້າການຕິດຕາມຊຸກຍູ້ແກ້ໄຂຜົນການກວດສອບດ້ວຍຄວາມຮັບຜິດຊອບສູງ ແລະ ຖືກຕ້ອງຕາມກົດໝາຍຢ່າງເຂັ້ມງວດ; (3) ຍົກສູງຄວາມຮັບຜິດຊອບ, ຄວາມເປັນເຈົ້າການຂອງຄະນະພັກ-ຄະນະນຳ ແລະ ຖືເອົາການແກ້ໄຂຜົນການກວດສອບຂອງແຕ່ລະພາກສ່ວນເປັນມາດຕະຖານເງື່ອນໄຂໃນການຕີລາຄາປະເມີນຜົນງານ ແລະ ຜົນສຳເລັດ; ພ້ອມນັ້ນ, ຕ້ອງປະຕິບັດມາດຕະການທາງວິໄນ, ທາງແພ່ງ, ທາງອາຍາ ໃຫ້ເດັດຂາດ ແລະ ເຂັ້ມງວດ. 2) ເຂັ້ມງວດການຈັດຕັ້ງປະຕິບັດກົດໝາຍ ເຂົ້າໃນວຽກງານການກວດສອບ, ຫຼີກລ່ຽງການຜ່ອນຜັນໂຍຍາຍ. 3) ຜັນຂະຫຍາຍບາງມາດຕາຂອງກົດໝາຍວ່າດ້ວຍການກວດສອບແຫ່ງລັດ ເປັນນິຕິກຳໃຕ້ກົດໝາຍໃຫ້ຄົບຖ້ວນ ແລະ ມີເນື້ອໃນຮັດກຸມ ເພື່ອເປັນບ່ອນອີງໃຫ້ແກ້ການແກ້ໄຂວຽກງານກວດສອບແຫ່ງລັດ. 4) ຮີບຮ້ອນປະສານສົມທົບກັບເປົ້າໝາຍການກວດສອບ ແລະ ກະຊວງການເງິນ ເກັບກູ້ຄືນເງິນ, ວັດຖຸອຸປະກອນ, ຊັບສິນຂອງລັດ ຕາມຜົນຂອງການກວດສອບທີ່ພົບເຫັນໃນປີ 2025 ໃຫ້ສຳເລັດທັນຕາມກຳນົດເວລາແລ້ວລາຍງານໃຫ້ ຄປຈສພຊ ຮັບຊາບ. 5) ສະຫຼຸບສັງລວມລາຍງານຄວາມຄືບໜ້າການຕິດຕາມຊຸກຍູ້ການແກ້ໄຂຜົນຂອງການກວດສອບ ໃຫ້ ຄປຈສພຊ ຮັບຊາບທຸກໆ 6 ເດືອນ. 6) ກວດສອບໂຄງການເຊົ່າ-ສຳປະທານທີ່ດິນ, ການນຳໃຊ້ງົບປະມານເຂົ້າໃນການລົງທຶນຂອງລັດ ໃຫ້ສົມຄູ່ລະຫວ່າງງົບປະມານ ແລະ ຄຸນນະພາບ; ກວດສອບຜົນການຈັດຕັ້ງປະຕິບັດການນຳໃຊ້ຊັບພະຍາກອນທຳມະຊາດ, ແຮ່ທາດລວມທັງບັນດາໂຮງງານອຸດສາຫະກຳ, ກະສິກຳປຸງແຕ່ງ ທີ່ສົ່ງຜົນກະທົບຕໍ່ທຳມະຊາດ, ສິ່ງແວດລ້ອມ ແລະສັງຄົມ.

ຕໍ່ອົງການກວດກາແຫ່ງລັດ

1) ສຶກສາອົບຮົມການເມືອງ-ແນວຄິດ ໃຫ້ແກ່ພະນັກງານ-ລັດຖະກອນ; 2) ແກ້ໄຂຜົນການກວດກາຕາມຜົນການກວດສອບຂອງບັນດາຂະແໜງການຍັງແກ້ໄຂຊັກຊ້າ, ມີຫຼາຍໂຄງການທີ່ກວດພົບ ແຕ່ຍັງບໍ່ທັນໄດ້ຮັບການແກ້ໄຂຢ່າງຂາດຕົວ ຫຼື ແກ່ຍາວເວລາ, ການເກັບກູ້ເງິນ, ຊັບສິນ ຍັງເກັບໄດ້ໜ້ອຍ; 3) ນຳໃຊ້ມາດຕະການທີ່ເຂັ້ມງວດຕໍ່ຂະແໜງການທີ່ໄດ້ກະທຳຜິດກົດໝາຍ ແລະ ລະບຽບການ; 4) ປະສານງານລະຫວ່າງອົງການກວດກາແຫ່ງລັດ ກັບ ອົງການກວດສອບແຫ່ງລັດ ແລະ ພາກສ່ວນກ່ຽວຂ້ອງໃນການດຳເນີນຄະດີທີ່ເຫັນວ່າຍັງບໍ່ທັນມີຄວາມເປັນເອກະພາບ ແລະ ເປັນເຈົ້າການຮ່ວມກັນເທົ່າທີ່ຄວນ; 5) ສ້າງແຜນກວດກາໃຫ້ທົ່ວເຖິງທຸກຂະແໜງການ ແລະເນັ້ນໜັກໃສ່ຂະແໜງທີ່ມີຄວາມສ່ຽງທີ່ຈະກະທຳຜິດ ແບບມີຈຸດສຸມ ແລະ ແກ້ໄຂເປົ້າໝາຍກວດກາໃຫ້ໄດ້ຢ່າງຂາດຕົວ; 6) ປັບປຸງຂັ້ນຕອນ, ກົນໄກ ແລະ ວິທີການກວດກາ ໃຫ້ສອດຄ່ອງກັບແຕ່ລະຂົງເຂດວຽກງານ ແລະ ທັນກັບສະພາບການ.ຕໍ່ກັບທິດທາງແຜນປີ 2027: 1) ເພີ່ມທະວີການສຶກສາອົບຮົມການເມືອງ-ແນວຄິດ, ຈັນຍາບັນ, ຈັນຍາທຳ ໃຫ້ແກ່ພະນັກງານ-ລັດຖະກອນ, ນັກກວດກາ, ຍົກສູງຄຸນທາດການເມືອງໃຫ້ໜັກແໜ້ນ; 2) ດຳເນີນການກວດກາເປົ້າໝາຍທີ່ກວດກາບໍ່ທັນສຳເລັດ ໃຫ້ສຳເລັດຕາມແຜນການ ໂດຍມີຂອບເວລາຊັດເຈນ; 3) ຄົ້ນຄວ້າສ້າງ ແລະ ປັບປຸງກົດໝາຍ, ນິຕິກຳໃຕ້ກົດໝາຍ ທີ່ຈຳເປັນໃຫ້ແກ່ວຽກງານກວດກາ ໄປຄຽງຄູ່ກັບການໂຄສະນາ, ເຜີຍແຜ່ການແກ້ໄຂຜົນຂອງການກວດກາ; 4) ຄົ້ນຄວ້າ ປັບປຸງກົນໄກແບບແຜນວິທີເຮັດວຽກໃຫ້ທັນເປັນທັນສະໄໝ ເຂົ້າໃນວຽກງານກວດກາໃຫ້ຫຼາຍຂຶ້ນ; 5) ສ້າງແຜນການ, ກຳນົດເປົ້າໝາຍ ແລະ ເພີ່ມທະວີການກວດກາ ຕິດພັນກັບການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ລວມທັງນຳເອົາຜູ້ກະທຳຜິດມາລົງໂທດ ພ້ອມທັງໃຊ້ແທນຄືນຜົນເສຍຫາຍ; 6) ຄົ້ນຄວ້າກົນໄກ ແລະ ວິທີການ ເພື່ອເກັບກູ້ຄືນຊັບສິນຂອງລັດ ທີ່ເສຍຫາຍຈາກຜູ້ກະທຳຜິດ ດ້ວຍຫຼາຍຮູບການ.

ສຳມະນາມິດຕະພາບລະຫວ່າງ ສະມາຊິກລັດຖະສະພາບັນດາປະເທດ



(ສພຊ) - ລະຫວ່າງວັນທີ10-15ຕຸລາ2026, ທ່ານ ນາງ ແສງມະນີ ຢາທໍ່ຕູ້ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 7 ແຂວງໄຊຍະບູລີ, ປະຈຳການກຳມາທິການເສດຖະກິດ ແລະ ການເງິນ ໄດ້ເຂົ້າຮ່ວມກອງປະຊຸມສຳມະນາມິດຕະພາບລະຫວ່າງສະມາຊິກລັດຖະສະພາຂອງບັນດາປະເທດ ປະຈຳປີ 2026 ທີ່ແຂວງທຽນຈີນ ແລະ ນະຄອນຫຼວງປັກກິ່ງ ສປຈີນ ພາຍໃຕ້ຫົວຂໍ້ “ການແບ່ງປັນການພັດທະນາທີ່ມີຄຸນນະພາບສູງ ແລະ ກໍ່ສ້າງອະນາຄົດທີ່ຍືນຍົງຮ່ວມກັນ” ໂດຍການເຂົ້າຮ່ວມຂອງສະມາຊິກລັດຖະສະພາ70 ທ່ານ ຈາກ 52 ປະເທດ; ກ່າວເປີດກອງປະຊຸມໂດຍທ່ານ ເຜີງ ຊິງຮວ່າ ຮອງປະທານຄະນະປະຈຳສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ເຊິ່ງເປັນປີເລີ່ມຕົ້ນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ ແລະສັງຄົມແຫ່ງຊາດຂອງ ສປຈີນ (2026-2030).

ຄະນະຜູ້ແທນໄດ້ຮ່ວມກັນປຶກສາຫາລື ແລະ ແລກປ່ຽນກັນ ພາຍໃຕ້ 6 ຫົວຂໍ້ທີ່ສຳຄັນຄື: 1) ການສົນທະນາລະຫວ່າງສະມາຊິກລັດຖະສະພາຈາກບັນດາປະເທດໂລກໃຕ້, 2) ການສົນທະນາກັບສະມາຊິກລັດຖະສະພາຈາກບັນດາປະເທດເອີຣົບ, 3) ການບໍລິຫານປົກຄອງຂັ້ນຮາກຖານ ແລະ ຄວາມສາມາດຂອງສັງຄົມ ໃນການຮັບມືແລະຟື້ນຕົວຈາກວິກິດທົ່ວໂລກ, 4) ການເຊື່ອມໂຍງອຸດສາຫະກຳກັບການສຶກສາ ແລະ ກຳລັງການຜະລິດຄຸນນະພາບໃໝ່, 5) ມໍລະດົກວັດທະນະທຳ ແລະ ການຟື້ນຟູຕົວເມືອງ, 6) ການພັດທະນາສີຂຽວ ແລະ ການປະສານງານລະຫວ່າງພາກພື້ນ. ກອງປະຊຸມສຳມະນາຄັ້ງນີ້ ດຳເນີນໄປໃນບັນຍາກາດທີ່ມີຄວາມເປັນເອກະພາບກັນ, ເອົາໃຈໃສ່ປະກອບຄຳຄິດຄຳເຫັນ ແລະ ແລກປ່ຽນກັນຢ່າງສ້າງສັນ, ນຳໃຊ້ຈຸດແຂງຂອງອົງການນິຕິບັນຍັດທີ່ເປັນບ່ອນລວມຂອງບຸກຄະລາກອນຜູ້ມີຄວາມຮູ້ຄວາມສາມາດ ແລະ ມີສາຍພົວພັນຢ່າງກວ້າງຂວາງ ເພື່ອເປັນຂົວເຊື່ອມການຮ່ວມມືລະຫວ່າງທ້ອງຖິ່ນ, ປະຊາຊົນ ແລະ ວິສາຫະກິດ; ຊຸກຍູ້ການແລກປ່ຽນ ແລະ ຮຽນຮູ້ເຊິ່ງກັນແລະກັນລະຫວ່າງອາລະຍະທຳ, ສົ່ງເສີມໃຫ້ປະຊາຊົນມີຄວາມເຂົ້າໃຈ ແລະ ຄວາມຜູກພັນຕໍ່ກັນຫຼາຍຂຶ້ນ.

ຄະນະຜູ້ແທນໄດ້ເຂົ້າຢ້ຽມຂໍ່ານັບທ່ານ ຈ້າວ ເລີ້ ຈີ ປະທານສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ໂດຍທ່ານກ່າວວ່າ“ສປຈີນ ຍິນດີຮ່ວມກັບລັດຖະສະພາບັນດາປະເທດ ແລະ ອົງການລັດຖະສະພາພະຫຸພາຄີ ເພື່ອເພີ່ມທະວີການແລກປ່ຽນໃນທຸກລະດັບ ແລະ ຫຼາຍຊັ້ນເຂດ, ປະກອບສ່ວນຕໍ່ການພັດທະນາສາຍພົວພັນລະຫວ່າງປະເທດ; ພວກເຮົາຈະເສີມຂະຫຍາຍການແລກປ່ຽນປະສົບການດ້ານວຽກງານນິຕິບັນຍັດ ແລະການບໍລິຫານປະເທດ, ສ້າງຫຼັກປະກັນທາງກົດໝາຍໃຫ້ແກ່ການຮ່ວມມືທີ່ເປັນຮູບປະທຳ, ປະກອບສ່ວນປົກປ້ອງຄວາມເປັນທຳ ແລະ ຄວາມຍຸຕິທຳສາກົນ”.

ນອກຈາກນັ້ນ, ໄດ້ຢ້ຽມຊົມສະພາຜູ້ແທນປະຊາຊົນທົ່ວປະເທດຈີນ, ສະຖາບັນການແພດ (Tellyes Academy of Medical Education - TAME), ສູນວິໄຈຂັ້ນສູງດ້ານສິລະປະບູຮານ ທີ່ວິທະຍາໄລທຽນກົງ, ອຸດສາຫະກຳສະໄໝໃໝ່ໃນເຂດພັດທະນາໃໝ່ປິ່ນໄຫ, ທ່າເຮືອອັດສະລິຍະປອດຄາບອນ ຂອງແຂວງທຽນຈີນ, ຖະໜົນວັດບູຮານເຂດໜານໄຄ, ໂຄງການພັດທະນາເມືອງສອນສາທາລະນະຈີນຢີ, ລ່ອງເຮືອຊົມໂຄງການພັດທະນາແມ່ນ້ຳໄຫ່ເຫີ, ສູນສະແດງສິນຄ້າ ແລະ ພາລາຊະວັງ ທີ່ນະຄອນຫຼວງປັກກິ່ງ.

ກະຊວງ...

(ຕໍ່ຈາກໜ້າ 1)

ບາງບັນຫາທີ່ຍັງບໍ່ໄດ້ກຳນົດໄວ້ໃນກົດໝາຍ; ຫຼັງຈາກນັ້ນ, ຈຶ່ງໄດ້ລາຍງານຜົນການປະເມີນຕໍ່ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງ ສພຊ ຊຸດທີ IX ແລະ ສະພາແຫ່ງຊາດ ກໍໄດ້ອອກມະຕິຮັບຮອງເອົາຜົນຂອງການປະເມີນດັ່ງກ່າວ ຄັ້ງວັນທີ 21 ພະຈິກ 2023 ວ່າດ້ວຍການຮັບຮອງເອົາຜົນການປະເມີນການຈັດຕັ້ງປະຕິບັດກົດໝາຍໃນຂົງເຂດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເປັນຕົ້ນ ການກຳນົດເນື້ອໃນບາງບັນຫາຂອງກົດໝາຍ ຍັງບໍ່ຈະແຈ້ງ, ຮັດກຸມ, ຄົບຖ້ວນ, ມີບາງບັນຫາຍັງບໍ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຍ້ອນການກຳນົດເນື້ອໃນບາງດ້ານບໍ່ທັນມີລັກສະນະຊຸກຍູ້, ສົ່ງເສີມໃຫ້ນາຍແລະພົນຕຳຫຼວດມີຄວາມຫ້າວຫັນໃນການປະຕິບັດໜ້າທີ່ ເຊັ່ນ: ອາຍຸກະສຽນປະດັບຊັ້ນ, ເລື່ອນຊັ້ນ, ປະດັບທຽບຊັ້ນ, ເລື່ອນທຽບຊັ້ນ ໃຫ້ນາຍ ແລະ ພົນຕຳຫຼວດແຕ່ລະຂັ້ນ; ການປະດັບຊັ້ນ ແລະ ປະດັບທຽບຊັ້ນ; ເງື່ອນໄຂການເລື່ອນຊັ້ນ;ການກຳນົດຊັ້ນໃສ່ຕຳແໜ່ງບັນຊາ;ອາຍຸກະສຽນຮັບບຳນານ; ການຍົກຂັ້ນເງິນເດືອນ; ການເສຍອິງຄະ; ລະບຽບການນຳພາບັນຊາ ແລະ ອື່ນໆ ເຫັນວ່າຍັງບໍ່ທັນສອດຄ່ອງກັບສະພາບການເຕີບໃຫຍ່ຂະຫຍາຍຕົວຂອງກຳລັງ ປກສ ໃນປັດຈຸບັນ ເນື່ອງຈາກລັດຖະທຳມະນູນ ແລະ ກົດໝາຍກ່ຽວຂ້ອງຈຳນວນໜຶ່ງ ທີ່ຕິດພັນກັບກຳລັງ ປກສ ກໍໄດ້ມີການປັບປຸງທາງດ້ານການຈັດຕັ້ງ, ວຽກງານວິຊາສະເພາະ ລວມທັງການຈັດຕັ້ງຂອງຂະແໜງການມີການປັບປຸງເປັນຕົ້ນ ມີການໂຮມບາງວຽກງານຂອງຂະແໜງການ ແລະ ການສ້າງຕັ້ງຕາແສງບວກກັບສະພາບເສດຖະກິດ-ສັງຄົມມີການຂະຫຍາຍຕົວ.

ທ່ານໃຫ້ຮູ້ຕື່ມວ່າ: ຫາກກົດໝາຍສະບັບນີ້ຖືກຮັບຮອງ ແລະ ປະກາດໃຊ້ຢ່າງເປັນທາງການ, ຄາດຄະເນຜົນໄດ້ຮັບດັ່ງນີ້:

1) ເປັນການປັບປຸງແບບແຜນວິທີເຮັດວຽກຂອງກົມກອງເຫຼົ່າວິຊາສະເພາະ, ນາຍ ແລະ ພົນຕຳຫຼວດ ໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງ, ມີວິໄນເຂັ້ມງວດ, ມີຈັນຍາບັນ-ຈັນຍາທຳ, ມີແບບແຜນໃນການຊີ້ນຳ, ບັນຊາ, ຄຸ້ມຄອງ, ຕິດຕາມກວດກາການເຄື່ອນໄຫວຕາມພາລະບົດບາດ, ສິດ ແລະ ໜ້າທີ່ວຽກງານວິຊາສະເພາະຂອງກຳລັງ ປກສ ໃຫ້ທັນເຂົ້າສູ່ກົດໝາຍ ແລະ ລະບຽບການ;

2)ເປັນບ່ອນອີງໃຫ້ບັນດາກະຊວງ, ອົງການຈັດຕັ້ງຕ່າງໆ ແລະ ອົງການປົກຄອງທ້ອງຖິ່ນສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ນາຍ ແລະ ພົນຕຳຫຼວດເຮັດໜ້າທີ່ຊ່ວຍເຫຼືອເບິ່ງແຍງທາງດ້ານວັດຖຸຈິດໃຈ ແລະຊີວິດການເປັນຢູ່ຂອງນາຍ ແລະ ພົນຕຳຫຼວດ ແລະ ຄອບຄົວ ໃຫ້ດີຂຶ້ນກວ່າເກົ່າ;

3)ເປັນບ່ອນອີງໃຫ້ແກ່ການຈັດຕັ້ງປະຕິບັດໜ້າທີ່ວຽກງານວິຊາສະເພາະຂອງກຳລັງ ປກສ ເພື່ອຮັບປະກັນການປົກປັກຮັກສາຄຸນລະພາບທາງດ້ານການເມືອງ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມເຮັດໃຫ້ປະເທດຊາດມີສະຖຽນລະພາບຄວາມໝັ້ນຄົງ;

4) ຮັບປະກັນການເຄື່ອນໄຫວ, ປົກປ້ອງ, ຄຸ້ມຄອງກຳລັງໃນຂະແໜງການ ປກສຂອບເຂດທົ່ວປະເທດໄປຕາມທິດປົກຄອງລັດດ້ວຍກົດໝາຍ.

ບາງຄຳເຫັນ...

(ຕໍ່ຈາກໜ້າ 1)

ຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2026 ແລະ ແຜນການປະຈຳປີ 2027 ຂອງສະພາແຫ່ງຊາດ ເຊິ່ງສະເໜີໃຫ້ເອົາໃຈໃສ່ຍົກສູງຄຸນນະພາບການຕິດຕາມກວດກາ ແລະ ແກ້ໄຂບາງບັນຫາ ດັ່ງນີ້:

- ລົງເລິກຕິດຕາມກວດກາແຕ່ຫົວທີ ວາລະແຫ່ງຊາດວ່າດ້ວຍການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ແລະ ການນຳໃຊ້ເຄື່ອງມືທັນສະໄໝໃນການຈັດເກັບລາຍຮັບ-ຄຸ້ມຄອງລາຍຈ່າຍ.

-ການສ້າງ ແລະປັບປຸງກົດໝາຍແຕ່ລະຄັ້ງຕ້ອງໄດ້ມີການເປີດກວ້າງ, ການຫາບທາມຄາຄິດເຫັນ, ການປະເມີນ, ການມີສ່ວນຮ່ວມຂອງອົງການຈັດຕັ້ງພັກ-ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ບັນດາອົງການຈັດຕັ້ງມະຫາຊົນ ນັບທັງຂັ້ນສູນກາງ-ທ້ອງຖິ່ນ ແລະ ປະຊາຊົນບັນດາເຜົ່າ ໃຫ້ແທດເຖິງທຸກເປົ້າໝາຍໃນສັງຄົມ; ພ້ອມກັນນັ້ນ, ການໂຄສະນາເຜີຍແຜ່ກົດໝາຍ ຕ້ອງລົງເລິກ ແລະ ເຂົ້າເຖິງປະຊາຊົນທຸກກຸ່ມເປົ້າໝາຍໃນສັງຄົມ.

- ການຮັບຮອງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍຕ້ອງມີການຄົ້ນຄວ້າຢ່າງລະອຽດເລິກເຊິ່ງ, ຈະແຈ້ງ, ຊັດເຈນ ກ່ອນທີ່ຈະຮັບຮອງ, ຮັບຮອງແລ້ວສາມາດຈັດຕັ້ງປະຕິບັດໃຫ້ເຂັ້ມງວດ ແລະ ເດັດຂາດ.

- ຕິດຕາມກວດກາ ແລະ ຊຸກຍູ້ວຽກງານການສຶກສາຂອງພາກລັດ ແລະ ເອກະຊົນ, ການບໍລິການສາທາລະນະສຸກ, ບັນຫາແຮງງານ, ການອະນຸລັກວັດທະນະທຳອັນດີງາມຂອງຊາດ ແລະ ຂອງເຜົ່າ.

- ເພີ່ມທະວີຄວາມຮັບຜິດຊອບ, ເອົາໃຈໃສ່ຫັນລົງພົບປະຜູ້ມີສິດເລືອກຕັ້ງຕາມເຂດເລືອກຕັ້ງໃຫ້ຫຼາຍກວ່າເກົ່າ; ການປະກອບຄຳຄິດຄຳເຫັນໃນກອງປະຊຸມສະພາແຫ່ງຊາດແຕ່ລະຄັ້ງ ຄວນນຳເອົາຄຳຄິດຄຳເຫັນຂອງປະຊາຊົນຜ່ານໄປຍັງລັດຖະບານໃຫ້ມີຈຸດສຸມ ແລະ ສະເໜີວິທີການແກ້ໄຂບັນຫາທີ່ເກີດຂຶ້ນໃຫ້ຖືກຈຸດ ພ້ອມທັງໃຫ້ກະຊວງ-ອົງການກ່ຽວຂ້ອງ ອອກຊີ້ແຈງຜົນການພິຈາລະນາແກ້ໄຂໃຫ້ທົ່ວສັງຄົມຮັບຮູ້.

ເຫດຜົນ...

(ຕໍ່ຈາກໜ້າ 1)

ຫານກອງທັບປະຊາຊົນລາວ ເຊິ່ງລາຍງານໃຫ້ຊາບວ່າ: ກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວສະບັບທຳອິດ ໄດ້ຖືກຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງ ສະພາແຫ່ງຊາດ ຊຸດທີ V ສະບັບເລກທີ 07/ສພຊ, ລົງວັນທີ 22 ຕຸລາ 2004, ຜ່ານການຈັດຕັ້ງປະຕິບັດເປັນເວລາ 14 ປີ ເຫັນວ່າໂຄງສ້າງຂອງກົດໝາຍບໍ່ທັນສອດຄ່ອງກັບກົດໝາຍວ່າດ້ວຍການສ້າງນິຕິກຳ, ການກຳນົດເນື້ອໃນບາງມາດຕາ ຍັງບໍ່ທັນແທດເໝາະກັບສະພາບການຂະຫຍາຍຕົວຂອງກອງທັບ, ມີບາງບັນຫາຍັງບໍ່ທັນໄດ້ກຳນົດໄວ້ໃນກົດໝາຍ; ສະນັ້ນ, ຈຶ່ງໄດ້ປັບປຸງກົດໝາຍສະບັບນີ້ໃນປີ 2018 ເຊິ່ງຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ VIII ສະບັບເລກທີ 084/ສພຊ, ລົງວັນທີ 14 ມິຖຸນາ 2018. ມາຮອດປີ 2023 ກະຊວງປ້ອງກັນປະເທດ ໄດ້ແຕ່ງຕັ້ງຄະນະຮັບຜິດຊອບປະເມີນຜົນການຈັດຕັ້ງປະຕິບັດກົດໝາຍສະບັບດັ່ງກ່າວ ເຊິ່ງເຫັນວ່າຍັງມີບາງບັນຫາພົບຄວາມຫຍຸ້ງຍາກໃນການຈັດຕັ້ງປະຕິບັດ, ບາງເນື້ອໃນທີ່ກຳນົດໄວ້ໃນກົດໝາຍແຕ່ບໍ່ໄດ້ຮັບການຈັດຕັ້ງປະຕິບັດ, ກົງກັນຂ້າມເນື້ອໃນທີ່ບໍ່ໄດ້ກຳນົດໄວ້ໃນກົດໝາຍ ແຕ່ໄດ້ຈັດຕັ້ງປະຕິບັດ ເຮັດໃຫ້ການຈັດຕັ້ງປະຕິບັດກົດໝາຍບໍ່ມີຄວາມເປັນເອກະພາບແລະບໍ່ເຂັ້ມງວດ; ນອກນັ້ນ, ການກຳນົດເນື້ອໃນບາງມາດຕາຂອງກົດໝາຍ ບໍ່ທັນຈະແຈ້ງ, ຮັດກຸມ, ຄົບຖ້ວນ ແລະ ຍັງມີຊ່ອງວ່າງເປັນສາເຫດໃຫ້ມີການຕີຄວາມໝາຍໄດ້ຫຼາຍແງ່.

ເຫດຜົນແລະຄວາມຈຳເປັນໃນການປັບປຸງກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ ເນື່ອງຈາກການເຕີບໃຫຍ່ຂະຫຍາຍຕົວຂອງກອງທັບປະຊາຊົນລາວ ເປັນຕົ້ນ: ການປັບປຸງກໍ່ສ້າງກົມກອງເຫຼົ່າຮົບ ທີ່ກອງທັບພວມຈັດຕັ້ງປະຕິບັດຢູ່ປັດຈຸບັນ ເຊິ່ງກົດໝາຍປີ 2018 ບໍ່ໄດ້ກຳນົດໄວ້. ການກຳນົດເນື້ອໃນບາງມາດຕາ ຍັງບໍ່ທັນຈະແຈ້ງ, ຮັດກຸມ ແລະ ຄົບຖ້ວນ;ຍັງມີບາງບັນຫາບໍ່ທັນໄດ້ກຳນົດໄວ້ໃນກົດໝາຍ ແລະ ການກຳນົດເນື້ອໃນບາງອັນ ບໍ່ທັນມີລັກສະນະຊຸກຍູ້, ສົ່ງເສີມໃຫ້ນາຍທະຫານມີຄວາມຫ້າວຫັນໃນການປະຕິບັດໜ້າທີ່ ເປັນຕົ້ນ: ອາຍຸກະສຽນປະດັບຊັ້ນ, ເລື່ອນຊັ້ນ, ປະດັບທຽບຊັ້ນ, ເລື່ອນທຽບຊັ້ນ ໃຫ້ນາຍທະຫານແຕ່ລະຂັ້ນ; ການປະດັບຊັ້ນ ແລະ ປະດັບທຽບຊັ້ນ ເປັນນາຍທະຫານ; ເງື່ອນໄຂການເລື່ອນຊັ້ນຂອງນາຍທະຫານ; ການກຳນົດຊັ້ນໃສ່ຕຳແໜ່ງບັນຊາຂອງນາຍທະຫານ; ອາຍຸກະສຽນຮັບບຳນານ; ການຍົກຂັ້ນເງິນເດືອນ; ການເສຍອິງຄະ;ການບັນຊາລະບົບສອງຫົວໜ້າ ແລະ ບັນຫາອື່ນທີ່ຕິດພັນກັບການປະຕິບັດນະໂຍບາຍຂອງນາຍທະຫານ.

ພາຍຫຼັງກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ ຖືກຮັບຮອງ ແລະ ປະກາດໃຊ້ແລ້ວ, ຄາດວ່າຈະມີຜົນໄດ້ຮັບດັ່ງນີ້: ເປັນເຄື່ອງມືອັນສຳຄັນໃຫ້ລັດ ໃນການຄຸ້ມຄອງວຽກງານນາຍທະຫານແບບລວມສູນ ແລະ ເປັນບ່ອນອີງໃຫ້ກະຊວງປ້ອງກັນປະເທດ ໃນການຄຸ້ມຄອງ, ນຳພາບັນຊາ, ສ້າງນາຍທະຫານ ແລະ ການປະຕິບັດນະໂຍບາຍຕໍ່ນາຍທະຫານ ເຮັດໃຫ້ນາຍທະຫານມີຄວາມໜັກແໜ້ນທາງດ້ານການເມືອງແນວຄິດ, ມີຄວາມເຂັ້ມແຂງ ແລະ ເຮັດສຳເລັດໜ້າທີ່ທີ່ໄດ້ຮັບມອບໝາຍ; ເປັນບ່ອນອີງໃຫ້ບັນດາກະຊວງ, ອົງການຈັດຕັ້ງຕ່າງໆ ແລະ ອົງການປົກຄອງທ້ອງຖິ່ນ ໃນການຄຸ້ມຄອງ ແລະ ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ນາຍທະຫານເຮັດສຳເລັດໜ້າທີ່, ຊ່ວຍເຫຼືອເບິ່ງແຍງທາງດ້ານວັດຖຸຈິດໃຈ ແລະຊີວິດການເປັນຢູ່ຂອງນາຍທະຫານ ແລະ ຄອບຄົວ ເປັນຕົ້ນ: ຄອບຄົວນາຍທະຫານຜູ້ເສຍສະຫຼະຊີວິດ, ຜູ້ເສຍອົງຄະ, ວິລະຊົນແຫ່ງຊາດ, ນັກຮົບແຂ່ງຂັນ, ພະນັກງານບຳນານ ແລະຄອບຄົວນາຍທະຫານຜູ້ທີ່ພວມປະຕິບັດໜ້າທີ່ພິເສດຢູ່ເຂດຫ່າງໄກສອກຫຼີກ, ທຸລະກັນດານ; ສ້າງສະຕິຕື່ນຕົວໃຫ້ນາຍທະຫານຕໍ່ການຈັດຕັ້ງ, ມີລະບຽບວິໄນເຂັ້ມງວດ ແລະ ເຮັດສຳເລັດໜ້າທີ່ການເມືອງຂອງກອງທັບທີ່ພັກ-ລັດ ມອບໝາຍໃຫ້; ກົດໝາຍມີເນື້ອໃນຄົບຖ້ວນ, ຊັດເຈນ, ຮັດກຸມ ແລະ ສອດຄ່ອງກັບສະພາບການປັບປຸງກໍ່ສ້າງກອງທັບໄລຍະໃໝ່.

ທຸລະກິດ...

(ຕໍ່ຈາກໜ້າ 1)

ແລະ ຄວາມຈຳເປັນໃນການປັບປຸງ, ຂະບວນການປັບປຸງ, ໂຄງປະກອບ ແລະ ເນື້ອໃນສຳຄັນ, ແລະ ຄາດຄະເນຜົນໄດ້ຮັບ ເຊິ່ງກົດໝາຍສະບັບດັ່ງກ່າວ ເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ໃຫ້ແກ່ຂະແໜງການສາທາລະນະສຸກ ແລະ ຂະແໜງການກ່ຽວຂ້ອງ ມາເປັນໄລຍະເວລາຫຼາຍກວ່າ 12 ປີ.

ຜ່ານການທົບທວນເນື້ອໃນ ແລະ ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າໄລຍະຜ່ານມາ ເຫັນໄດ້ວ່າຫຼາຍມາດຕາຍັງບໍ່ທັນມີຄວາມຮັດກຸມ ໂດຍສະເພາະການຄຸ້ມຄອງການຜະລິດເຫຼົ້າແບບຄອບຄົວໃນຊຸມຊົນ, ການໂຄສະນາຂອງພາກທຸລະກິດທີ່ສົ່ງເສີມໃຫ້ເຍົາວະຊົນ-ຊາວໜຸ່ມ ມີຄ່ານິຍົມດື່ມເຄື່ອງດື່ມທີ່ມີທາດເຫຼົ້າດ້ວຍຫຼາຍຮູບແບບ ແລະ ກາຍເປັນວັດທະນະທຳໃນການດຳລົງຊີວິດ ທີ່ສົ່ງຜົນກະທົບຕໍ່ສຸຂະພາບຢ່າງກວ້າງຂວາງ;ການຈຳໜ່າຍເຄື່ອງດື່ມທີ່ມີທາດເຫຼົ້າຍັງບໍ່ທັນມີການກຳນົດລະບຽບການຄຸ້ມຄອງ ແລະ ອອກອະນຸຍາດທີ່ຊັດເຈນໃນດ້ານເວລາ-ສະຖານທີ່ລວມທັງມາດຕະການປັບໃໝຕໍ່ຜູ້ລະເມີດ ຍັງເບົາບາງ, ບໍ່ໜັກແໜ້ນ ແລະ ບໍ່ໄດ້ກຳນົດຊັດເຈນໃນກົດໝາຍ ສົ່ງຜົນເຮັດໃຫ້ມີປາກົດການຫຍໍ້ທໍ້ຕ່າງໆເກີດຂຶ້ນໃນສັງຄົມ ເປັນຕົ້ນແມ່ນການບໍລິໂພກເຫຼົ້າບໍ່ໄດ້ຮັບການກວດກາຢັ້ງຢືນຄຸນນະພາບ ເຊິ່ງເປັນຜະລິດຕະຜົນທີ່ຜະລິດເອງໃນງານບຸນປະເພນີຕ່າງໆຂອງທ້ອງຖິ່ນ, ອຸບັດເຫດຕາມທ້ອງຖະໜົນທີ່ເພີ່ມຂຶ້ນ ສ້າງຜົນກະທົບທາງດ້ານສຸຂະພາບ,ເສດຖະກິດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

ພາຍຫຼັງກົດໝາຍສະບັບປັບປຸງນີ້ ຖືກຮັບຮອງ ແລະ ປະກາດໃຊ້, ເຊື່ອໝັ້ນວ່າຈະເຮັດໃຫ້ວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ໄດ້ຮັບການຈັດຕັ້ງປະຕິບັດຢ່າງເປັນລະບົບ, ຄ່ອງຕົວ, ມີປະສິດທິພາບ ແລະ ປະສິດທິຜົນສູງ ນັບແຕ່ສູນກາງລົງຮອດທ້ອງຖິ່ນ; ຊຸມຊົນມີຄວາມເຊື່ອໝັ້ນ, ເປັນເຈົ້າການ ແລະ ມີສ່ວນຮ່ວມຢ່າງຫ້າວຫັນຕໍ່ວຽກງານດັ່ງກ່າວ ແລະ ຮັບປະກັນໃຫ້ການດຳເນີນທຸລະກິດກ່ຽວກັບເຄື່ອງດື່ມທີ່ມີທາດເຫຼົ້າ ໄດ້ຮັບການຄຸ້ມຄອງ, ຕິດຕາມກວດກາຢ່າງເປັນລະບົບທັງເປັນການຍົກສູງບົດບາດຂອງລັດຖະບານໃນການກຳນົດນະໂຍບາຍກ່ຽວກັບການຄຸ້ມຄອງເຄື່ອງດື່ມທີ່ມີທາດເຫຼົ້າ, ມາດຕະການປ້ອງກັນ, ສົ່ງເສີມສຸຂະພາບປະຊາຊົນລາວ ສູງເດັ່ນຂຶ້ນ ແລະ ຫຍັບມໍ່ມາດຕະການຂອງພາກພື້ນ ແລະ ສາກົນ.



ສຸຂະພາບ

ທັນຍະພືດ 5 ສີ ສຸດຍອດອາຫານບຳລຸງສຸຂະພາບ

 # ຮຽບຮຽງໂດຍ: ຫອມສະນິດ



ໃນປັດຈຸບັນ, ການເບິ່ງແຍງດູແລສຸຂະພາບດ້ວຍອາຫານທຳມະຊາດກຳລັງເປັນທີ່ນິຍົມຢ່າງຫຼາຍ ໜຶ່ງໃນອາຫານທີ່ນັກໂພຊະນາການແນະນຳຢ່າງກວ້າງຂວາງກໍຄື “ທັນຍະພືດ 5 ສີ” ຫຼື ຖົ່ວ 5 ຊະນິດ. ການກິນຖົ່ວໃຫ້ຄົບ 5 ສີ ບໍ່ພຽງແຕ່ໃຫ້ໂປຣຕີນສູງເທົ່ານັ້ນ ແຕ່ຕາມຕຳລາການແພດແຜນບູຮານ ແລະ ໂພຊະນາການສະໄໝໃໝ່ແຕ່ລະສີຂອງທັນຍະພືດຍັງມີສານອາຫານ ແລະ ປະໂຫຍດທີ່ຊ່ວຍບຳລຸງອະໄວຍະວະພາຍໃນທີ່ແຕກຕ່າງກັນຢ່າງໜ້າອັດສະຈັນ ມື້ນີ້ພວກເຮົາມາຮູ້ນຳກັນເລີຍວ່າ ທັນຍະພືດທັງ 5 ສີ ມີດີແນວໃດຕໍ່ຮ່າງກາຍ:

1. ຖົ່ວສີຂຽວ (ຖົ່ວຂຽວ): ຊ່ວຍລ້າງພິດ ແລະ ບຳລຸງຕັບ.

- ຄຸນປະໂຫຍດ: ຖົ່ວຂຽວອຸດົມໄປດ້ວຍເສັ້ນໄຍອາຫານ (Fiber) ແລະ ມີລິດເຢັນ ຊ່ວຍດັບຮ້ອນ, ລ້າງສານພິດໃນຮ່າງກາຍ ແລະ ບຳລຸງຕັບ. ນອກຈາກນີ້, ຍັງມີວິຕາມິນບີສູງ ທີ່ຊ່ວຍບຳລຸງລະບົບປະສາດ, ຫຼຸດລະດັບຄໍເລສເຕີຣອນໃນເລືອດ ແລະ ຊ່ວຍໃຫ້ລະບົບຂັບຖ່າຍເຮັດວຽກໄດ້ດີ.

2. ຖົ່ວສີແດງ (ຖົ່ວແດງ): ຊ່ວຍບຳລຸງເລືອດ ແລະ ຫົວໃຈ.

- ຄຸນປະໂຫຍດ: ສີແດງຂອງຖົ່ວແດງມາຈາກສານແອນໂທໄຊຢານິນ (Anthocyanin) ເຊິ່ງເປັນສານຕ້ານອະນຸມູນອິດສະຫຼະສູງ ຊ່ວຍຊະລໍຄວາມເສື່ອມຂອງເຊວ, ບຳລຸງເສັ້ນຜົມໃຫ້ດຳງາມບໍ່ຫລົ່ນງ່າຍ ແລະ ຍັງຊ່ວຍຄວບຄຸມລະດັບນ້ຳຕານໃນເລືອດໄດ້ດີ.

3. ຖົ່ວສີດຳ (ຖົ່ວດຳ): ຊ່ວຍບຳລຸງໝາກໄຂ່ຫຼັງ ແລະ ເສີ້ນຜົມ.

-ຄຸນປະໂຫຍດ: ໃນທາງການແພດແຜນຈີນ, ອາຫານສີດຳຈະຊ່ວຍບຳລຸງໝາກໄຂ່ຫຼັງໂດຍກົງ. ຖົ່ວດຳມີສານຕ້ານອະນຸມູນອິດສະຫຼະສູງຊ່ວຍຊະລໍຄວາມເສື່ອມຂອງເຊວ, ບຳລຸງເສັ້ນຜົມໃຫ້ດຳງາມບໍ່ຫລົ່ນງ່າຍ ແລະ ຍັງຊ່ວຍຄວບຄຸມລະດັບນ້ຳຕານໃນເລືອດໄດ້ດີ.

4. ຖົ່ວສີຂາວ/ລາຍ (ຖົ່ວຂາວ ຫຼື ຖົ່ວຕາລຳ): ຊ່ວຍເສີມສ້າງກະດູກ ແລະ ກ້າມເນື້ອ.

-ຄຸນປະໂຫຍດ: ຖົ່ວສີຂາວ ຫຼື ຖົ່ວຕາລຳ (Black-eyed pea) ເປັນແຫຼ່ງແຄລຊຽມ ແລະ ຟົດສະຟໍຣັດທີ່ດີ ເຊິ່ງຊ່ວຍບຳລຸງກະດູກ ແລະ ແຂ້ວໃຫ້ແຂງແຮງ. ນອກຈາກນີ້, ຍັງມີສານທີ່ຊ່ວຍຍັບຍັ້ງການຍ່ອຍແປ້ງເປັນນ້ຳຕານ ເຮັດໃຫ້ເໝາະສຳລັບຜູ້ທີ່ຕ້ອງການຄວບຄຸມນ້ຳໜັກ.

5. ຖົ່ວສີເຫຼືອງ (ຖົ່ວເຫຼືອງ): ບຳລຸງຜິວພັນ, ສະໝອງ ແລະ ປອດ.

-ຄຸນປະໂຫຍດ: ຖົ່ວເຫຼືອງຖືເປັນ "ລາຊິນີແຫ່ງຖົ່ວ" ເພາະມີໂປຣຕີນສູງທຽບເທົ່າກັບເນື້ອສັດ ອຸດົມໄປດ້ວຍສານໄຟໂຕເອສໂຕຣເຈນ (Phytoestrogens) ທີ່ຊ່ວຍປັບສົມດຸນຮໍໂມນ, ບຳລຸງຜິວພັນໃຫ້ສົດໃສ, ຫຼຸດອາການໄວທອງ ແລະ ມີເລຊິທິນ (Lecithin) ທີ່ຊ່ວຍບຳລຸງສະໝອງ ແລະ ຄວາມຈຳ.

ການຮັບປະທານທັນຍະພືດ 5 ສີ ເປັນປະຈຳ ເປັນວິທີການດູແລສຸຂະພາບທີ່ງ່າຍ, ປະຢັດ ແລະ ໄດ້ປະໂຫຍດຄົບຖ້ວນຈາກທຳມະຊາດ ພຽງແຕ່ເພີ່ມຖົ່ວ 5 ສີເຂົ້າໃນອາຫານປະຈຳວັນ, ຮ່າງກາຍຂອງທ່ານກໍຈະໄດ້ຮັບພະລັງງານ ແລະ ສານອາຫານທີ່ສົມບູນ ເພື່ອສຸຂະພາບທີ່ແຂງແຮງໃນໄລຍະຍາວ.



ຕົ້ນຕາຍ ລະບາຍ

(ເລື່ອງເບົາໆ ເຂົ້າແບບກັບເອງ ບໍ່ເຄັ່ງພິທີການ)

 # ສຸຂມ ຫ້ຽນ

*ຕາມຂ່າວໃຫ້ຮູ້ວ່າ: ຫົດໂລກປະສົບອີກິດຈາກທຳມະຊາດຢ່າງໜັກໃບຮອບຫຼາຍປີ ຈາກປາກົດການເອວບີໂຍ **(El Nino)** ແລະໃບໄລຍະນີ້ ແມ່ນພວມປະເຊີນກັບບັນຫາໄພແຫ້ງແລ້ງ ເປ່ືອງຈາກຝົນຊາດຊ່ອງໃບໄລຍະທີ່ຜ່ານມາ ອາໃປເຄັຍອັ່ງລໍ້ ເຕັ້ນຝັ່ງສາຍຫາລາ ບັດນີ້ສັ່ງມາ ປ່ຽນແປງແປປົ້ນ ດິນເຄັຍເຕັ້ນດ້ວຍອາຫານຫັນຍະພືດ ສັ່ງມາເຫຼືອແຕ່ພົ້ນ ຖຸລີຖ້ວນບ່ເຫັນຫຍັງ **ໜ່າຍແດ!** ຝົນສັ່ງບ່ເຫຼັ່ງໃຫ້ ໂດຍດັ່ງລະດູການ **ນັ້ນບ!** ພ້ືນາສາລ່ານ້ຳໄພ ຊົ່ນບານຫ໊ອແຍ້ນ ຫຼືອ່ານເປັນແຫນການເອ້ັ ເອ໊ານ້ຳຈາກຫ່ານະສາດ ເພາະມ້ືຫາໜ້ົດແຄ້ນ ນະນຸດພ້ືນລຸ່ມນະພາ **ບ່ແດ!***

*ຄ້ນ**ອ**ກພ້ືນສາປະອ່ລະນາຜ່ານພ້ືນຫຼາຍເຄ້ນ ກ່ານະກຽມຈິດກຽມໃຈ ຫ້ັງກຽມເງ້ນໄດ້ໃສ່ຊ່ອງຕ່ານລະດູການ ຫ້ັງກຽມງ່ານບ່ານ ແຕ່ງແປງເອ໊ານ້ໍ ກຽມໃຈເອ໊ານ້ເຂ້ັຍພ້ອມ ຈ້ັດງ່ານດ່ອງພິທ້ແຕ່ງ ສ່ານສ້ົ່ບ້ັດອ້ັ່ງລ໊ັ້ນ ອ່ອນເງ້ນໄດ້ໃສ່ແຕ່ຊ່ອງ **ພ້ົ່ນ້ອງເອ້ັຍ!***

ຊອບຍິ້ມ

 # ພ້ົ້ງ ລ້ົ

ເລື່ອງ: ຄວາມໃຫຍ່ຄົງເດີມ

ສຸບີ ແລະ ສຸບາ ເປັນສອງຄົນທ້ີ່ນ້ິດໄສສຸດແສບລະແຫງຕ່າງກັນປານຟ້າກັບດິນ; ມ້ື້ໜ້ຶ່ງ ຫ້ັງສອງຄົນໄດ້ເດ້ີນທາງໄປທ່ຽວບ່ານ້ັນ, ໃນຂະນະທ້ີ່ລ້ັບລ໊ົ້ບຢູ່້ນ້ັ້ນ ສຸບາ ໄດ້ເກ້ັດອາການເຈ້ັບຢ່ຽວ ຈ້ຶ່ງໄດ້ບອກໃຫ້ສຸບີ ຈອດລ໊ົ້ດລ້ຽງທາງເພ້ືອລ້ົ່ງໄປຢ່ຽວ; ຕອນທ້ີ່ພວມຢ່ຽວຢູ່້ນ້ັ້ນ, ສຸບາ ທ້ີ່ຢູ່້ໃນລ໊ົ້ດ ໄດ້ຮ້ອງອອກໄປວ່າ: “ຊ້ິເຮ້ັດຫຍັງ ໃຫ້ຄອບເຈ້ົ້າຖ້ີບເຈ້ົ້າຖາບແດ່”

ແຕ່ ສຸບີ ເປັນຄົ້ນຫ ົ້ອດ້ົ້ບ່ຟ້ັງໃຜ ຈ້ຶ່ງເອ້ົ້າດ້ອຍຫ່າທ່ຽງກະຟ້ົດ ກະຟ້ົດວ່າ: “ເຈ້ົ້າຖ້ີບເຈ້ົ້າຖາບອ້ີຫຍັງ ມ້ັນຊ້ິມ້ີຫຍັງ ໃຜຊ້ິມ້ີສ້ົ່ບໃຈຢູ່້ນ້ໍ” ແລະຕອບນ້ັ້ນເອງ ຕ້ີນລາວໄດ້ໄປເຕ ະເອ໊ົ້າສ້ົ່ນໄມ້ທ້ີ່ມ້ີຮ້ັງແຕນຢູ່ ຈ້ຶ່ງຄ້ົ້ນ ແຕນລຸ້ນຕອດ ຈ້ົ່ນເຈ້ັບປອດ, ລາວຈ້ຶ່ງສ້ັ່ງຄອນຄາງອອກມາວ່າ: “ຂະນ້ອຍຢ້ານແລ້ວ ເຈ້ົ້າຖ້ີບເຈ້ົ້າຖາບເອ້ັຍ! ຂ້ີ້ໃຫ້ຄວາມເຈ້ັບຈ້ຶ່ງຫ ົ້ອໄປ ຄວາມໃຫຍ່ຄົງເດີມແດ່ຫ ົ້ອບ”



ສຸພາສິດ-ຄະຕິເຕືອນໃຈ

 # ດອກຫຍ້າ

“ຕາຫຼັກໄດ້ ຕາໂປ້ເສຍ”



ຢາກ-ຢ້ານ

ຍິນຊຶ່ງສຽງມ່ວນແມ້ງ
ເຫັນພາບເຜິ່ງພໍພະໄມ
ອັນໃດເດແດນຜຸ້ນ
ຈັ່ງແມ່ນມັນຮື່ນເຮ້ົ

ລິດຊາດແສນແຊບຊ້ອຍ
ສຳຜັດບາງເບົາໜັກ
ຜັດສະ ກາຍເປັນເຄ້ົ
ຫັດໃຫ້ ຈຳຈ່ີແຈ້ງ

ຄວາມຢາກ ຊອມຊຸກໃຫ້
ຫາກເຂົ້າມ້ີຄຸນນະທຳ
ຢາກຈະພາຝົນສ້ົ
ຢາກຈະເສ ມສ່ິງຊ ົ້ານ

ຫາກແມ່ນຄວາມຢາກຢ້ັ
ຢາກຈະພາເລ ຍແລວ
ຢາກຈະເຜ ົ້າຜານສ້ຽ
ຢາກຈະຈຸ ງຈ ົ້ອງພ ົ້

ຢາກແລ ົ້ວ ຢ ົ້ຳຢ ົ້ອນຢ ົ້ານ
ຢາກແລ ົ້ວ ເກ ງປ ົ້ັ
ຢາກແລ ົ້ວ ລ ົ້ອງບ ົ້ານຢ ົ້ານ
ຜ ົ້ິຈານ ດ ົ້ິເດ ົ້ັ່ນດ ົ້ານ

ຄ ົ້ິນເອ ົ້ີຍ ຂ ົ້ໍຈ ົຸ້່ງຢ ົ້ຍາກ-ຢ ົ້ານ
ເອ ົ້ົາຢາກ ເປ ົ້ັນຕ ົ້ິອຊ
ເອ ົ້ົາຢ ົ້ານ ຂ ົ້ິນຂ ົ້ວ ງ ົ້ັ
ເອ ົ້ົາຢ ົ້ານ ຢ ົ້ັນຢ ົ້າກຫ ົ້ານ

ມາຊ ົ້ິ ນໃນມ ົ້ະໂນ ແທ ົ້ນ
ເ ົ້ິດເ ົ້ິ ນລ ົ້ິໃຫ ົ້ແທ ົ້
ວ ົ້ົາໂຍໂຍນ ົ້ິ ່ ນ ມ ົ້ານ
ຫ ົ້ອມກ ົ້ຽວກ ົ່ອມດ ົ້ັ ນ ົ້ິ ນ ົ້ານ

ຊ ົ້ິມ ົ່ານຊ ົ ົ້ວຫ ົ ົ້ານ
ນ ົ ່ ມນ ົ ົ ້ອນພ ົ ົ ້ານ ົ ົ ້ ົ ົ ້ ົ
ຂ ົ ົ ້ອງ ົ ົ ້ອນ ົ ົ ້ ມ ົ ົ ້ ນ ົ ົ ້ ເ ົ ົ ້ ົ ົ ້ ົ
ສ ົ ົ ້ ົ ົ ້ ົ ົ ້

ກອງປະຊຸມ...

(ຕໍ່ຈາກໜ້າ 1)

ນີ້ ໄດ້ຄົ້ນຄວ້າ ແລະ ພິຈາລະນາໜັງສືສະເໜີຂອງລັດຖະບານຈຳນວນໜຶ່ງ, ການກະກຽມເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ ຄັ້ງທີ 47 ແລະ ກອງປະຊຸມພົບປະລະຫວ່າງຜູ້ນຳໄອປາ ກັບ ຜູ້ນຳອາຊຽນ ຄັ້ງທີ 15 (AIPA-ASEAN Leaders' Interface) ທີ່ຈະຈັດຂຶ້ນທີ່ປະເທດຟີລິບປິນ; ພ້ອມນັ້ນ, ກອງປະຊຸມຍັງໄດ້ຕີລາຄາການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຊ ຊຸດທີ X ທີ່ໄດ້ດຳເນີນໃນລະຫວ່າງວັນທີ 5-9 ຕຸລານີ້.

ປີ 2026...

(ຕໍ່ຈາກໜ້າ 1)

ເກືອບ 1 ປີຜ່ານມາ ມີຜົນສຳເລັດຫຼາຍດ້ານ ດັ່ງນີ້:

ດ້ານນິຕິບັນຍັດ:

- ຮັບຮອງເອົາກົດໝາຍວ່າດ້ວຍຄັງເງິນແຫ່ງລັດ (ສ້າງໃໝ່) ແລະ ກົດໝາຍວ່າດ້ວຍງົບປະມານແຫ່ງລັດ ຢູ່ກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງ ສພຊ ຊຸດທີ X;

-ຜັນຂະຫຍາຍແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ ມາເປັນແຜນການປະຈຳປີ 2026 ເພື່ອນຳເຂົ້າພິຈາລະນາຮັບຮອງເອົາຢູ່ກອງປະຊຸມສະໄໝສາມັນເທື່ອທີ2ຂອງສພຊ ຊຸດທີ X 8 ສະບັບ (ສ້າງໃໝ່ 1 ສະບັບ);

- ໃຫ້ສັດຕະຍາບັນແກ່ສົນທິສັນຍາ-ສັນຍາສາກົນ ທີ່ ສປປລາວ ເປັນພາຄີ 8 ສະບັບ;

-ຜັນຂະຫຍາຍມາດຕາຂອງກົດໝາຍ ອອກເປັນນິຕິກຳໃຕ້ກົດໝາຍ 259 ມາດຕາ ຕິດພັນກັບ 74 ກົດໝາຍ ກວມເອົາ 4 ຂົງເຂດ ໃນນີ້, ການປົກຄອງ ແລະ ຍຸຕິທຳ 48 ມາດຕາ ກວມເອົາ 13 ກົດໝາຍ, ປກຊ-ປກສ 11 ມາດຕາ ກວມເອົາ 4 ກົດໝາຍ, ເສດຖະກິດ 135 ມາດຕາ ກວມເອົາ 36 ກົດໝາຍ, ວັດທະນະທຳ-ສັງຄົມ 60 ມາດຕາ ກວມເອົາ 19 ກົດໝາຍ ແລະ ຕ່າງປະເທດ 5 ມາດຕາ ກວມເອົາ 2 ກົດໝາຍ.

ດ້ານການຕີລາຄາບັນຫາສຳຄັນພື້ນຖານຂອງປະເທດຊາດ:

- ຮັບຮອງເອົາການເລືອກຕັ້ງ ແລະ ການແຕ່ງຕັ້ງບຸກຄະລາກອນໃນຕຳແໜ່ງສຳຄັນຂອງລັດ, ກົງຈັກການຈັດຕັ້ງຂອງລັດ, ແຜນການເຄື່ອນໄຫວວຽກງານ 5 ປີ ຂອງພາກສ່ວນຕ່າງໆ ເຊິ່ງອອກເປັນມະຕິກອງປະຊຸມຄັ້ງປະຖົມມະລຶກຂອງ ສພຊ ຊຸດທີ X 20 ສະບັບ;

- ຮັບຮອງເອົາຜົນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ6ເດືອນຕົ້ນປີແລະ ທິດທາງແຜນການ 6 ເດືອນທ້າຍປີ2026; ການຍົກລະດັບບັນຫາການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຂຶ້ນເປັນວາລະແຫ່ງຊາດ ຕິດພັນກັບການຮັບຮອງເອົາກົດໝາຍທີ່ກ່ຽວຂ້ອງ ໂດຍອອກເປັນມະຕິກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງ ສພຊ ຊຸດທີ X 4 ສະບັບ;

-ປັບປຸງກົງຈັກການຈັດຕັ້ງ ສພຊ ຊຸດທີ X ໂດຍໂຮມຈາກ 9 ກຳມາທິການ,ຄະນະເລຂາທິການ ແລະ ສະຖາບັນຄົ້ນຄວ້ານິຕິກຳ ມາເປັນ 5 ກຳມາທິການ ແລະ ຫ້ອງວ່າການ ເຮັດໃຫ້ການປັບປຸງກົງຈັກຂັ້ນກົມ, ຂັ້ນພະແນກ ຫຼຸດຈາກ 28 ກົມ ມາເປັນ 20 ກົມ ແລະ ຈາກ 68 ພະແນກຍັງເຫຼືອ57ພະແນກ;

- ດຳເນີນກອງປະຊຸມ ຄປຈສພຊ ສະໄໝສາມັນ ແລະ ວິສາມັນ ນັບແຕ່ເດືອນມີນາ-ຕຸລາ 16 ຄັ້ງ ພິຈາລະນາຕີລາຄາເນື້ອໃນຕ່າງໆ82 ຫົວຂໍ້, ອອກເປັນມະຕິ 96 ສະບັບ ໃນນີ້, ຮັບຮອງເອົາບຸກຄະລາກອນຂອງອົງການໄອຍະການປະຊາຊົນສູງສຸດ ແລະ ສານປະຊາຊົນສູງສຸດ 70 ສະບັບ.

ດ້ານການຕິດຕາມກວດກາ:

- ດຳເນີນກອງປະຊຸມຮ່ວມລະຫວ່າງ ຄປຈ ສພຊ ກັບ ລັດຖະບານ ເພື່ອປຶກສາຫາລື ແລະ ມີຄວາມເປັນເອກະພາບກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ໄລຍະ 6 ເດືອນຕົ້ນປີ ແລະ ແຜນຈຸດສຸມ 6 ເດືອນທ້າຍປີ 2026; ວາລະແຫ່ງຊາດ ວ່າດ້ວຍການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ; ມາດຕະການສົ່ງເສີມລົດໄຟຟ້າ ແລະ ພະລັງງານທົດແທນ; ທິດທາງການພັດທະນາແຮ່ທາດໃນໄລຍະໃໝ່; ກະກຽມເນື້ອໃນທີ່ຈະນຳເຂົ້າພິຈາລະນາຢູ່ກອງປະຊຸມສະໄໝວິສາມັນເທື່ອທີ 1;

- ຕິດຕາມ, ຊຸກຍູ້ ແລະ ຊ່ວຍເຫຼືອ ຢູ່ 10 ແຂວງທີ່ໄດ້ຮັບຜົນກະທົບຈາກໄພທຳມະຊາດໃນກາງປີນີ້ ດ້ວຍການລະດົມເປັນທຶນຊ່ວຍເຫຼືອ 1,150 ລ້ານກີບ;

- ຮັບຄຳຮ້ອງທີ່ສະສົມມາແຕ່ ສພຊ ຊຸດທີ IX 673 ສະບັບ ແລະ ຮັບເຂົ້າໃໝ່ 213 ສະບັບ ລວມທັງໝົດ 886 ສະບັບ, ແກ້ໄຂ 44 ສະບັບ ເທົ່າກັບ 20.66% ຂອງຄຳຮ້ອງທີ່ເຂົ້າມາໃນປີ 2026; ຮັບຕ້ອນ ແລະ ໃຫ້ຄຳປຶກສາແກ່ປະຊາຊົນ 159 ຄັ້ງ.

ດ້ານການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ:

ຍົກສູງຂີດຄວາມສາມາດໃຫ້ແກ່ສະມາຊິກສະພາແຫ່ງຊາດ (ສສຊ), ສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຂ) ແລະ ເສນາທິການ ດ້ວຍການຈັດເຝິກອົບຮົມສຳມະນາ 26 ຫົວຂໍ້ ແລະ ເຝິກອົບຮົມວຽກງານການສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານ-ລັດຖະກອນຂອງ ສພຊ, ສະພາປະຊາຊົນຂັ້ນແຂວງ (ສພຂ) 8 ຫົວຂໍ້.

ການເຄື່ອນໄຫວຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ:

-ເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກຂອງ ສພຊ ຊຸດທີ X ແລະ ສພຂ ຊຸດທີ V, ກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງ ສພຊ ຊຸດທີ X ຢູ່ບາງເຂດເລືອກຕັ້ງ ກວມເອົາ 1,023 ຈຸດ ມີຜູ້ເຂົ້າຮ່ວມ 109,098 ຄົນ ເປັນຍິງ 47,040 ຄົນ; ລະດົມເງິນ ແລະ ວັດຖຸປະກອນການຊ່ວຍເຫຼືອຈາກພາກສ່ວນຕ່າງໆ ລວມມູນຄ່າ 3,550,261,000 ກີບ;

- ປັບປຸງ ແລະ ໂຮມຂະແໜງຊ່ວຍວຽກຂອງ ສພຂ ຈາກ 3 ຄະນະກຳມະການ ແລະ ຄະນະເລຂາທິການ, 10 ຂະແໜງ ມາເປັນ 3 ຄະນະກຳມະການ ແລະ ຫ້ອງວ່າການ, 6 ຂະແໜງ; ຄົ້ນຄວ້າ, ຕີກລົງການເລືອກຕັ້ງແທນ ສສຊ ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ ແລະ ຍົກຍ້າຍໜ້າທີ່ຂອງ ສສຂ ໄຊຍະບູລີ ແລະ ຊຽງຂວາງ ຕາມການສະເໜີ.

ດ້ານການເຄື່ອນໄຫວວຽກງານຕ່າງປະເທດ:

- ເຄື່ອນໄຫວການຕ່າງປະເທດ ຜ່ານຮູບການຕ່າງໆ 49 ຄັ້ງ ໃນນີ້, ພົບປະແລກປ່ຽນບົດຮຽນກັບບັນດາປະເທດເພື່ອນມິດຍຸດທະສາດ 6 ຄັ້ງ; ເຂົ້າຮ່ວມກອງປະຊຸມພາກພື້ນ ແລະ ສາກົນດ້ວຍຮູບແບບກອງປະຊຸມປົກກະຕິ ແລະ ກອງປະຊຸມທາງໄກ 23 ຄັ້ງ; ຕ້ອນຮັບຄະນະຜູ້ແທນ, ການເຂົ້າຢ້ຽມຂ່ຳນັບ ແລະ ອວຍພອນ ຂອງບັນດາຄະນະຜູ້ແທນຈາກຕ່າງປະເທດ ລວມທັງທູຕານຸທູດ ແລະ ອົງການຈັດຕັ້ງສາກົນ ປະຈຳຢູ່ລາວ 20 ຄັ້ງ; ສົ່ງສານຊົມເຊີຍ, ສານອວຍພອນ, ສານຂອບໃຈ, ສານເສົ້າສະຫຼົດໃຈ ແລະ ສານອື່ນເນື່ອງໃນໂອກາດວັນຕ່າງໆ ຫຼາຍກວ່າ 40 ສະບັບ;

- ເປັນເຈົ້າພາບຈັດກອງປະຊຸມພົບປະລະຫວ່າງສະພາແຫ່ງຊາດລາວ ກັບ ລັດຖະສະພາສະຫະພາບເອີຣົບ ຄັ້ງທີ 7, ກອງປະຊຸມກຳມາທິການປະຈຳກ່ຽວກັບການລົງທຶນໃສ່ຊາວໜຸ່ມ ຂອງອົງການສະມາຊິກລັດຖະສະພາອາຊີ ເພື່ອປະຊາທອນ ແລະ ການພັດທະນາ, ກອງປະຊຸມປຶກສາຫາລືກ່ຽວກັບບັ້ນຫານ້ຳ ຂອງລັດຖະສະພາອາຊີ ຄັ້ງທີ 9, ກອງປະຊຸມໂຕະມົນກ່ຽວກັບບັນຫາອາກາດ ແລະ ນ້ຳ ຄັ້ງທີ 3; ແຕ່ງຕັ້ງຄະນະມິດຕະພາບລັດຖະສະພາລະຫວ່າງສະພາແຫ່ງຊາດລາວ ກັບ ຕ່າງປະເທດ 16 ຄະນະ, ຄະນະສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA), ຄະນະສະຫະພັນລັດຖະສະພາສາກົນ (IPU) ແລະ ຄະນະສະມັດຊາລັດຖະສະພາບັນດາປະເທດທີ່ໃຊ້ພາສາຝຣັ່ງ (APF) ຂອງສະພາແຫ່ງຊາດ ແຫ່ງ ສປປລາວ.



#ບ່າວກະບື

ດາວອະທິບາຍໃຫ້ສ່ຽວດ່ຳຟັງ: “ຕອນເຮົາແຕ່ງດອງຫ່ຳອີດ ຈັ່ງແມ່ນຊາດເຮົາມີຄວາມສຸກ, ເຮົາກັບເຮືອນຕອນກາງຄືນ ຝ່າຍບາງເມຍກ່ຳຈະເປັນຜູ້ເອົາເກີບແຕະມາໃຫ້ໃສ່, ສ່ອນໝາບ້ອຍນ້ອຍກ່ຳແລ່ນກ້ຽວໆຮອບໆ ເຫົ່າເຮົາອອກໆເຂົ້າໆ. ແຕ່ດຽວນີ້ ຫຼັງຈາກ 6 ປີ ທຸກສິ່ງທຸກຢ່າງໄດ້ປ່ຽນແປງໄປ. ໝາເຮັດໜ້າທີ່ຄາບເກີບແຕະມາໃຫ້ເຮົາໃສ່, ສ່ອນບາງເມຍນັ້ນເປັນຜູ້ເຫົ່າເຮົາ”

“ແມ່ນໃຕຊິຈົ່ມທຸກຈົ່ມຍາກໄປເຮັດຫຍັງ?” ສ່ຽວດ່ຳຖາມຄືນ

“ແນວໃດໃຕກ່ຳຍັງໄດ້ຮັບບໍລິການແບບເກົ່າຢູ່ບໍ່ແມ່ນຫວະ”

#BAOKBU

Dao explained to his friend Dam: “When I first got married I was so happy, I would come home at night and my wife would bring my slippers and my little dog would race around the room and bark at me. But now, after six years, that's all changed. Now my dog brings my slippers and my wife barks at me!”

“What are you complaining about?” asked Dam.

“You are still getting the same serbice aren't you”

ຜູ້ຊີ້ນຳ
ທ່ານ ເອັມພອນ ອາໂນໄທ ຮອງຫົວໜ້າຫ້ອງວ່າການສະພາແຫ່ງຊາດ

ຄະນະບັນນາທິການ
ທ່ານ ບໍ ທານປະເສີດ ຫົວໜ້າ ບກ
ທ່ານ ເອລາວັນ ພັນທະລາວົງ ຮອງຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າ ບກ

ກອງບັນນາທິການ
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ສຸພາວັນ ຫອມສະນິດ
ທ່ານ ນາງ ອາລິນ ສຸພິມມະປະດິດ

ອອກແບບ - ຈັດໜ້າ
ທ່ານ ນາງ ນິດຕາ ຄຸນປາກດີ

ຮູບພາບປະກອບ
ທ່ານ ສອນສັກ ວັນວິໄຊ
ທ່ານ ອານຸສອນ ພູມມີທອນ